ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານນັກກວດສອບອິດສະຫຼະ	4 - 7
ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ	8
ໃບລາຍງານຖານະການເງິນ	9 -10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	11
ໃບລາຍງານກະແສເງິນສົດ	12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 - 39

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 1169/ຈທວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 1375/ກຄກ ລົງວັນທີ 1 ກັນຍາ 2020 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ , ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL")ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ເວີຍ ຫວາ	ປະທານ	ລາອອກວັນທີ 29 ພຶດສະພາ 2020
ທ່ານ ນາງ ໂຈ ເລ່	ປະທານ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ນາງ ອໍລະໄທ ສັນຕິຄົງຄາ	ຮອງປະທານ	
ທ່ານ ຫຼົ່ວ ກວາງຊ້ານ	ສະມາຊິກ	ລາອອກວັນທີ 29 ພຶດສະພາ 2020
ທ່ານ ເວ່ຮົ່ວ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ບຸລະພາ ສັນຕິຄົງຄາ	ສະມາຊິກ	
ທ່ານ ສາຍ ຈ້ຽນຫົງ	ສະມາຊິກ	ລາອອກວັນທີ 29 ພຶດສະພາ 2020
ທ່ານ ສັນ ເຝ່ໜຸ		ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ຫຼີ ສ່ຽວຕົງ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ອຸ່ຊົ່ງຫວາ	ສະມາຊິກ	
ທ່ານ ສ່ຽວ ໂຢງ	ສະມາຊິກ	
ທ່ານ ນາງ ເຕົ໋ງ ຢຸ່	ສະມາຊິກ	
ທ່ານ ຈໍສິ່ງ ບົວສີເນ້ັ່ງມາ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພະຈິກ 2019
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ	

ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ຫຼີ ສ່ຽວຕົ໋ງ	ຜູ້ອຳນວຍການໃຫຍ່	
ທ່ານ ຊິນເຝີຍ ຫຸ	ຜູ້ອຳນວຍການ	
ທ່ານ ຊຸ ໂຍ	ຜູ້ອຳນວຍການ	ລາອອກວັນທີ 29 ພຶດສະພາ 2020
ທ່ານ ອຸ່ ຊິງຫວາ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ29 ພຶດສະພາ 2020

ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ສ່ຽວ ໂຢ໋ງ	ຫົວໜ້າ	ລາອອກວັນທີ 29 ພຶດສະພາ 2020
ທ່ານ ນາງ ເຕົ໋ງ ຢຸ່	ຫົວໜ້າ	ແຕ່ງຕັ້ງວັນທີ29 ພຶດສະພາ 2020
		ລາອອກວັນທີ 29 ພຶດສະພາ 2020
ທ່ານ ນາງ ໂຈ ເລ່	ສະມາຊິກ	ແຕ່ງຕັ້ງວັນທີ29 ພຶດສະພາ 2020
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ	

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດແມ່ນ ທ່ານ ເວີຍ ຫວາ ສຳລັບໄລຍະຮອດວັນທີ 31 ສິງຫາ 2020 ແລະ ທ່ານ ນາງ ໂຈ ເລ່ ແມ່ນ ສຳລັບໄລຍະ ວັນທີ 1 ກັນຍາ 2020 ຮອດມື້ອອກປົດລາຍງານສະບັບນີ້.

ທ່ານ ຫຼີ ສ່ຽວຕົ໋ງ ໄດ້ຮັບອະນຸຍາດເຊັ້ນເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ໂດຍອີງຕາມໃບ ອະນຸຍາດວັນທີ 1 ພະຈິກ 2017.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັ໋ງ ລາວ ຈຳກັດ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີສະເໜີບົດລາຍງານ ແລະ ເອກະສານລາຍງານທາງການເງິນຂອງບໍລິສັດສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນຂອງແຕ່ລະປີໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳ ສຳລັບໃບລາຍງານຖານະການເງິນຂອງບໍລິສັດ ແລະ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງປີ, ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົານັບດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່ານັບດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ຫາກມີການເປີດເຜີຍຂໍ້ມູນທີ່ສຳຄັນ ແລະ ໄດ້ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຄາດຄະເນວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງບໍລິສັດຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ຕາງໜ້າຄະນະບໍລິຫານ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫຼີ ສ່ຽວຕົ໋ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 61403331/22072483

ບົດລາຍງານນັກກວດສອບອິດສະລະ

ເຖິງ: ຂາຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນນະວັນທີ 31 ທັນວາ 2020, ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບປີທີ່ສິ້ນສຸດ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ພ້ອມທັງສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນແມ່ນໄດ້ຖືກກະກຽມໂດຍຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ໄດ້ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນຫົວ "*ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ*" ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບ ກົດຈັນຍາບັນວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ກ່ຽວກັບບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍກ່ຽວກັບນະໂຍບາຍບັນຊີທີ່ນຳໃຊ້ໂດຍບໍລິສັດ. ນະໂຍບາຍບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດ ໂດຍອີງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

ບັນຫາການກວດສອບທີ່ສຳຄັນ

ໃນການຕັດສິນໃຈໃນແບບມືອາຊີບຂອງພວກຂ້າພະເຈົ້າ ບັນຫາການກວດສອບຫຼັກແມ່ນບັນຫາທີ່ມີຄວາມສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຂອງໄລຍະປັດຈຸບັນ. ບັນຫາເຫຼົ່ານີ້ແມ່ນຖືກນຳສະເໜີໃນເນື້ອໃນຂອງການກວດສອບເອກະສານລາຍງານການເງິນໂດຍທັງໝົດ ແລະ ໃນການປະກອບຄຳເຫັນຂອງພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ໃຫ້ຄຳຄິດເຫັນແບບສະເພາະກ່ຽວກັບບັນຫາເຫຼົ່ານີ້. ສຳລັບແຕ່ລະບັນຫາຂ້າງລຸ່ມນີ້, ຄຳອະທິບາຍກ່ຽວກັບວິທີການກວດສອບຂອງພວກຂ້າພະເຈົ້າໃນການແກ້ໄຂບັນຫາດັ່ງກ່າວແມ່ນຖືກນຳສະເໜີຢູ່ໃນເອກະສານລາຍງານການເງິນ.

A member firm of Ernst & Young Global Limited

EY
Building a better working world

ບັນຫາການກວດສອບທີ່ສຳຄັນ (ຕໍ່)

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນ *ຄວາມຮັບຜິດຊອບຂອງຜູ້ກວດສອບໃນການກວດສອບເອກະສານລາຍງານການເງິນ* ໃນບົດລາຍງານຂອງພວກຂ້າພະເຈົ້າ ລວມເຖິງສິ່ງທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງພວກຂ້າພະເຈົ້າຈຶ່ງລວມເຖິງການປະຕິບັດຕາມຂະບວນການທີ່ໄດ້ຖືກອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງໃນເອກະສານລາຍງານການເງິນ. ຜົນໄດ້ຮັບຈາກຂັ້ນຕອນໃນການກວດສອບຂອງພວກຂ້າພະເຈົ້າໄດ້ໃຫ້ພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນທີ່ກ່ຽວຂ້ອງ ເຊິ່ງລວມມີຂັ້ນຕອນການປະຕິບັດເພື່ອແກ້ໄຂບັນຫາດັ່ງລຸ່ມນີ້.

ການຮັບຮູ້ລາຍຮັບ

ເນື່ອງຈາກລັກສະນະທຸລະກິດ, ບໍລິສັດມີລາຍຮັບຫຼາຍປະເພດ ແລະ ລາຍຮັບຈາກການດຳເນີນງານອື່ນໆ ເຊັ່ນ ລາຍຮັບຄ່າເຊົ່າຈາກໜ່ວຍຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ, ຄ່າເຊົ່າປ້າຍໂຄສະນາ ແລະ ການຈັດງານສັງສັນຕ່າງໆ, ສ່ວນແບ່ງລາຍຮັບຈາກສັນຍາການຮ່ວມທຸລະກິດ, ໂດຍລວມເປັນ 10,997,412,493 ກີບ ພາຍໃນປີ. ມີຄວາມສ່ຽງທີ່ອາດເຮັດໃຫ້ເກີດຂໍ້ຜິດພາດອັນໃຫຍ່ຫຼວງດ້ານການເກີດຂຶ້ນຈິງ, ຄວາມຄົບຖ້ວນ ແລະ ການຕັດຍອດລາຍຮັບ ແລະ ການຮັບຮູ້ລາຍຮັບຈາກການດຳເນີນງານອື່ນໆ. ພວກຂ້າພະເຈົ້າພິຈາລະນາການຮັບຮູ້ລາຍຮັບ ແລະ ລາຍຮັບຈາກການດຳເນີນງານອື່ນໆ ເປັນສິ່ງທີ່ສຳຄັນໃນການກວດສອບ, ເນື່ອງຈາກ (ກ) ຂະບວນການຮຽກເກັບເງິນມີຄວາມຊັບຊ້ອນ (ຂ) ຮອບວຽນໃນການຮຽກເກັບເງິນອາດບໍ່ກົງກັບການປິດບັນຊີໃນທ້າຍປີ ແລະ ຜົນກະທົບທີ່ເກີດຂຶ້ນອາດຈະໃຫຍ່ຫຼວງຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ. ນອກຈາກການທົດສອບການຄວບຄຸມທີ່ບໍລິສັດກຳນົດໄວ້ເໜືອກວ່າຂະບວນການຂອງບໍລິສັດເພື່ອໃຫ້ໝັ້ນໃຈວ່າ ການເກີດຂຶ້ນຈິງ ແລະ ການຮັບຮູ້ລາຍໄດ້ດັ່ງກ່າວເປັນໄປຕາມກຳນົດເວລາ, ຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າລວມເຖິງການທົດສອບຈາກການສຸ່ມເລືອກຕົວຢ່າງ ເພື່ອໃຫ້ໝັ້ນໃຈວ່າທຸລະກຳລາຍຮັບນັ້ນໄດ້ຖືກຍອມຮັບຈາກເອກະສານທີ່ກ່ຽວຂ້ອງ ແລະ ຮັບຮູ້ໃນໄລຍະເວລາທີ່ເໝາະສົມ. ນະໂຍບາຍການບັນຊີສຳລັບການຮັບຮູ້ລາຍຮັບແມ່ນຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 3.12 ແລະ 3.14, ການເປີດເຜີຍລາຍລະອຽດກ່ຽວກັບລາຍຮັບຂອງບໍລິສັດແມ່ນຖືກນຳສະ ເໜີຢູ່ໃນບົດອະທິບາຍເລກທີ 4.

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ

ບໍລິສັດ ບັນທຶກບັນຊີຊັບສິນເພື່ອການລົງທຶນ ("ຊັບສິນເພື່ອການລົງທຶນ") ໂດຍນຳໃຊ້ວິທີແບບມູນຄ່າຍຸຕິທຳ. ນະວັນທີ 31 ທັນວາ 2020, ມູນຄ່າຕາມບັນຊີຂອງຊັບສິນເພື່ອການລົງທຶນຂອງບໍລິສັດມີຈຳນວນ 194,125,161,160 ກີບ ຫຼື ເທົ່າກັບ 75% ຂອງຊັບສິນລວມຂອງບໍລິສັດ. ພວກຂ້າພະເຈົ້າພິຈາລະນາວ່າ ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ ເປັນບັນຫາການກວດສອບທີ່ສຳຄັນ ເນື່ອງຈາກວ່າ: (ກ) ຜົນກະທົບຂອງການດັດແກ້ມູນຄ່າຍຸຕິທຳທັງໝົດມີຜົນສະທ້ອນສຳຄັນຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ ແລະ, (ຂ) ຂະບວນການປະເມີນຊັບສິນເພື່ອການລົງທຶນຕ້ອງມີການຕຳນຶງຢ່າງຮອບຄອບ ໃນການພິຈາລະນາວິທີການປະເມີນມູນຄ່າທີ່ເໝາະສົມ ມີການຕຳນວນທີ່ສັບຊ້ອນ ເຊິ່ງ ກ່ຽວຂ້ອງກັບການຄາດຄະເນ, ສົມມຸດຖານ ແລະ ຂໍ້ມູນບາງຢ່າງເຊັ່ນ: ອັດຕາຄ່າເຊົ່າ, ອັດຕາການເຂົ້າເຊົ່າ, ອັດຕາສ່ວນຫຼຸດ ແລະ ອັດຕາການເຕີບໃຕ ເຊິ່ງຂຶ້ນຢູ່ກັບປັດໃຈພາຍນອກ ແລະ ພາຍໃນທີ່ປະເມີນໂດຍຜູ້ບໍລິຫານ. ດັ່ງນັ້ນ, ຂະບວນການກວດສອບຂອງພວກຂ້າພະເຈົ້າລວມເຖິງການມີສ່ວນຮ່ວມຂອງຜູ້ຊ່ຽວຊານພາຍໃນຂອງພວກຂ້າພະເຈົ້າໃນການປະເມີນວິທີການ ແລະ ສົມມຸດຖານ ທົບທວນຄືນການນຳໃຊ້ສົມມຸດຖານ ແລະ ການຄາດຄະເນທີ່ໃຊ້ໃນການປະເມີນລາຄາໂດຍຜູ້ບໍລິຫານ ແລະ ຜູ້ປະເມີນລາຄາຂອງບໍລິສັດ ແລະ ປະເມີນຄວາມພຽງພໍຂອງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນໃນການປະເມີນມູນຄ່າຂອງຊັບສິນເພື່ອການລົງທຶນ. ນະໂຍບາຍການບັນຊີທີ່ກ່ຽວຂ້ອງ ແລະ ການປຶກສາຫາລືກ່ຽວກັບການໃຊ້ດຸນຍິນິດ ແລະ ການຄາດຄະເນທີ່ສຳຄັນແມ່ນໄດ້ຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 2.2 ແລະ 3.5 ແລະ ການເປີດເຜີຍລາຍລະອຽດກ່ຽວກັບຊັບສິນເພື່ອການດຳເນີນງານແມ່ນຖືກນຳສະເໜີຢູ່ໃນບົດອະທິບາຍເລກທີ 12.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານແມ່ນມີໜ້າທີ່ຮັບຜິດຊອບໃນການສ້າງເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າມີຄວາມຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານບໍລິສັດຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານບໍລິສັດ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະລະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ, ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນຄວາມສືບເນື່ອງໃນການດຳເນີນທຸລະກິດ.ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະລະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກ

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ (ຕໍ່)

ຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະລະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານບໍລິສັດກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າຍັງໄດ້ນຳສະເໜີຕໍ່ຄະນະບໍລິຫານວ່າ ພວກຂ້າພະເຈົ້າໄດ້ປະຕິບັດຕາມຂໍ້ກຳນົດດ້ານຈັນຍາບັນທີ່ກ່ຽວຂ້ອງກັບຄວາມເປັນເອກະລາດ, ແລະ ສື່ສານດ້ານຄວາມສຳພັນຕ່າງໆ ແລະ ປັດໄຈອື່ນໆ ທີ່ອາດເປັນຜົນທີ່ຄວນຄຳນຶງເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປົກປ້ອງທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ.

ຈາກບັນດາເລື່ອງທີ່ສື່ສານກັບຄະນະບໍລິຫານ, ພວກຂ້າພະເຈົ້າພິຈາລະນາສິ່ງເຫຼົ່ານັ້ນເປັນສິ່ງສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນໃນໄລຍະປັດຈຸບັນ ແລະ ເປັນບັນຫາທີ່ສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເຫດການເຫຼົ່ານີ້ໃນບົດລາຍງານຂອງພວກຂ້າພະເຈົ້າ ເວັ້ນເສຍແຕ່ກົດໝາຍ ຫຼື ຂໍ້ບັງຄັບບໍ່ອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນ ຫຼື ເມື່ອໃນສະຖານະການທີ່ຫຍຸ້ງຍາກ ພວກຂ້າພະເຈົ້າຫາພົບວ່າບັນຫາເຫຼົ່ານັ້ນບໍ່ຄວນສື່ສານລົງໃນບົດລາຍງານເພາະອາດຈະເກີດຜົນກະທົບດ້ານລົບຈາກການກະທຳນັ້ນໆ ຫຼາຍກວ່າຜົນປະໂຫຍດຕໍ່ມວນຊົນກ່ຽວກັບການສື່ສານດັ່ງກ່າວ.

ບໍລິສັດ ເອີ ແອນ ຢັ ງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ແອ່ງ ຫວ ຈິ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

A member firm of Ernst & Young Global Limited

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ*	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ລາຍຮັບ	4	9,089,266,191	10,003,956,689
ລາຍຮັບອື່ນໆຈາກການດຳເນີນງານ		1,908,146,302	2,645,856,039
ລາຍຮັບລວມ		**10,997,412,493**	**12,649,812,728**
ລາຍຈ່າຍຈາກການດຳເນີນງານ	5	(846,240,739)	(998,293,517)
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ	12	1,474,216,851	522,700,000
ກຳໄລຈາກການດຳເນີນງານ		**11,625,388,605**	**12,174,219,211**
ລາຍຮັບທາງການເງິນ	6	1,701,290,218	187,809,544
ລາຍຈ່າຍທາງການເງິນ	7	(2,291,851,284)	(2,279,361,633)
ກຳໄລກ່ອນອາກອນ		**11,034,827,539**	**10,082,667,122**
ລາຍຈ່າຍອາກອນກຳໄລ	8	(1,533,588,364)	(2,348,785,463)
ກຳໄລພາຍໃນປີ		**9,501,239,175**	**7,733,881,659**
ລາຍຮັບອື່ນໆນອກການທຸລະກິດພາຍໃນປີ, ອາກອນສຸດທິ		-	-
ລວມລາຍຮັບນອກການທຸລະກິດພາຍໃນປີ, ອາກອນສຸດທິ		**9,501,239,175**	**7,733,881,659**
ກຳໄລຕໍ່ຮຸ້ນ			
- *ພື້ນຖານກຳໄລພາຍໃນປີຂອງຜູ້ຖືຮຸ້ນສາມັນ*	*20*	*64.55*	*61.23*

ກະກຽມໂດຍ:

ທ່ານ ຊິນເຝີຍ ຫູ້
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*31 ທັນວາ 2020 ກີບ*	*31 ທັນວາ 2019 ກີບ*
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	9	22,497,520,522	38,655,476,969
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	10	30,878,284,709	13,207,235,168
ຈ່າຍລ່ວງໜ້າສຳລັບຊື້ຊັບສິນຄົງທີ່	11	10,000,000,000	23,400,000,000
ລວມຊັບສິນໝຸນວຽນ		**63,375,805,231**	**75,262,712,137**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ	12	194,125,161,160	165,197,500,000
ຊັບສິນບັດຄົງທີ່ທີ່ມີຕົວຕົນ		4,561,085	-
ລວມຊັບສິນບໍ່ໝຸນວຽນ		**194,129,722,245**	**165,197,500,000**
ລວມຊັບສິນ		**257,505,527,476**	**240,460,212,137**

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*31 ທັນວາ 2020 ກີບ*	*31 ທັນວາ 2019 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະສັ້ນ	13	5,349,436,856	3,929,632,436
ລວມໜີ້ສິນໝຸນວຽນ		**5,349,436,856**	**3,929,632,436**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະຍາວ	13	6,643,543,597	-
ເງິນກູ້ຢືມໄລຍະຍາວ	14	64,232,500,000	64,232,500,000
ໜີ້ຕ້ອງສົ່ງອາກອນລໍຖ້າຊຳລະສະສາງ	8	6,188,878,021	4,773,943,187
ລວມໜີ້ສິນບໍ່ໝຸນວຽນ		**77,064,921,618**	**69,006,443,187**
ລວມໜີ້ສິນ		**82,414,358,474**	**72,936,075,623**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	15	147,199,900,000	147,199,900,000
ສ່ວນເກີນມູນຄ່າຮຸ້ນ		2,559,995,000	2,559,995,000
ຄັງແຮຕາມລະບຽບການ		2,726,548,069	1,776,424,152
ຄັງແຮເພື່ອຂະຫຍາຍທຸລະກິດ		2,726,548,069	1,776,424,152
ກຳໄລສະສົມ		19,878,177,864	14,211,393,210
ລວມທຶນ		**175,091,169,002**	**167,524,136,514**
ລວມໜີ້ສິນ ແລະ ທຶນ		**257,505,527,476**	**240,460,212,137**

ກະກຽມໂດຍ:

孙飞虎

ທ່ານ ຊຶນເຝີຍ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫູ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ສ່ວນເກີນມູນຄ່າຮຸ້ນ* *ກີບ*	*ຄັງແຮຕາມລະບຽບການ* *ກີບ*	*ຄັງແຮເພື່ອຂະຫຍາຍທຸລະກິດ* *ກີບ*	*ກຳໄລສະສົມ* *ກີບ*	*ລວມທັງໝົດ* *ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2019	**96,000,000,000**	**-**	**1,140,216,421**	**1,140,216,421**	**9,121,731,365**	**107,402,164,207**
ຮຸ້ນອອກຈຳໜ່າຍ	51,199,900,000	2,559,995,000	-	-	-	53,759,895,000
ການດັດແກ້ອາກອນໃນປີທີ່ຜ່ານມາ	-	-	(137,180,435)	(137,180,435)	(1,097,443,482)	(1,371,804,352)
ກຳໄລສຸດທິພາຍໃນປີ	-	-	-	-	7,733,881,659	7,733,881,659
ຈັດສັນກຳໄລເຂົ້າຄັງແຮ	-	-	773,388,166	773,388,166	(1,546,776,332)	-
ຍອດເຫຼືອນະວັນທີ 31 ທັນວາ 2019	**147,199,900,000**	**2,559,995,000**	**1,776,424,152**	**1,776,424,152**	**14,211,393,210**	**167,524,136,514**
ຍອດເຫຼືອນະວັນທີ 1 ມັງກອນ 2020	**147,199,900,000**	**2,559,995,000**	**1,776,424,152**	**1,776,424,152**	**14,211,393,210**	**167,524,136,514**
ກຳໄລສຸດທິພາຍໃນປີ	-	-	-	-	9,501,239,175	9,501,239,175
ແຈ້ງເງິນປັນຜົນ	-	-	-	-	(1,934,206,687)	(1,934,206,687)
ຈັດສັນກຳໄລເຂົ້າຄັງແຮ	-	-	950,123,917	950,123,917	(1,900,247,834)	-
ຍອດເຫຼືອນະວັນທີ 31 ທັນວາ 2020	**147,199,900,000**	**2,559,995,000**	**2,726,548,069**	**2,726,548,069**	**19,878,177,864**	**175,091,169,002**

ກະກຽມໂດຍ:

孙飞虎

ທ່ານ ຊິນເຟີ ຫຸ້
ຜູ້ຈັດການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ
7 ເມສາ 2021

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

	ບົດອະທິບາຍ ເລກທີ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 LAK*	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 LAK*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**11,034,827,539**	**10,082,667,122**
ການດັດແກ້ສຳລັບ:			
ການຫັກຄ່າຫຼຸ້ຍຫ້ຽນພາຍໃນປີ		1,023,915	-
ຄ່າເຊື່ອມມູນຄ່າຂອງໜີ້ເສຍ		171,444,970	-
ກຳໄລຈາກການຕີມູນຄ່າໃນຊັບສິນເພື່ອການລົງທຶນ	12	(1,474,216,851)	(522,700,000)
ລາຍຈ່າຍດອກເບ້ຍ		2,291,851,284	2,279,361,633
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ			
ການເພີ່ມຂຶ້ນຂອງໜີ້ຕ້ອງຮັບ		(6,734,345,795)	(30,090,577,654)
ການເພີ່ມຂຶ້ນຂອງໜີ້ຕ້ອງສົ່ງ		8,341,373,403	241,260,360
ອາກອນກຳໄລທີ່ຈ່າຍແລ້ວ		(396,678,916)	(1,238,700,574)
ກະແສເງິນສົດສຸດທິ ຈາກ/(ໃຊ້ໃນ) ກິດຈະກຳການດຳເນີນງານ		**13,235,279,549**	**(19,248,689,113)**
ກິດຈະກຳການລົງທຶນ			
ການຊື້ອະສັງຫາລິມມີຊັບເພື່ອການລົງທຶນ		(27,453,444,309)	-
ການຊື້ຊັບສິນບັດຄົງທີ່ທີ່ມີຕົວຕົນ		(5,585,000)	-
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**(27,459,029,309)**	**-**
ກິດຈະກຳການເງິນ			
ລາຍຮັບຈາກການອອກຮຸ້ນທຶນ – ມູນຄ່າໜ້າໃບ		-	51,199,900,000
ສ່ວນເກີນມູນຄ່າຮຸ້ນ		-	2,559,995,000
ການຈ່າຍເງິນປັນຜົນ		(1,934,206,687)	-
ກະແສເງິນສົດສຸດທິ (ໃຊ້ໃນ)/ຈາກກິດຈະກຳທາງການເງິນ		**(1,934,206,687)**	**53,759,895,000**
ເງິນສົດ (ຫຼຸດລົງ)/ເພີ່ມຂຶ້ນສຸດທິພາຍໃນປີ		**(16,157,956,447)**	**34,511,205,887**
ເງິນສົດໃນຕົ້ນປີ		**38,655,476,969**	**4,144,271,082**
ເງິນສົດໃນທ້າຍປີ	**9**	**22,497,520,522**	**38,655,476,969**

ກະກຽມໂດຍ:

孙飞虎

ທ່ານ ຊິນເຟີ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ໋ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
7 ເມສາ 2021

1. ຂໍ້ມູນກ່ຽວກັບບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 1169/ຈທວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 1375/ກຄກ ລົງວັນທີ 1 ກັນຍາ 2020 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL")ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

2. ພື້ນຖານການກະກຽມ

2.1 *ພື້ນຖານການກະກຽມ*

ເອກະສານລາຍງານການເງິນຂອງບໍລິສັດແມ່ນຖືກສ້າງຂຶ້ນໂດຍນຳໃຊ້ມູນຄ່າຕົ້ນທຶນເດີມ ຍົກເວັ້ນ ຊັບສິນເພື່ອການລົງທຶນ ທີ່ໄດ້ຖືກວັດແທກດ້ວຍມູນຄ່າຍຸຕິທຳ. ເອກະສານລາຍງານການເງິນນີ້ແມ່ນໄດ້ສະແດງເປັນ ສະກຸນເງິນກີບ ("ກີບ") ເນື່ອງຈາກເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການເຮັດທຸລະກຳສ່ວນໃຫຍ່ຂອງບໍລິສັດ.

ເອກະສານລາຍງານການເງິນຂອງບໍລິສັດ ໄດ້ມີການກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານທາງການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ປີການບັນຊີ

ປີການບັນຊີຂອງບໍລິສັດເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

2.2 *ການພິຈາລະນາ, ປະເມີນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ*

ການກະກຽມເອກະສານລາຍງານການເງິນຂອງບໍລິສັດ ຄະນະບໍລິຫານຕ້ອງພິຈາລະນາ, ປະເມີນ ແລະ ຕັ້ງສົມມຸດຖານ ທີ່ມີຜົນກະທົບຕໍ່ການລາຍງານທາງດ້ານລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ການເປີດເຜີຍຂໍ້ມູນ, ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ການປະເມີນ ແລະ ຕັ້ງສົມມຸດຖານແມ່ນມີການປະເມີນຢ່າງຕໍ່ເນື່ອງໂດຍອີງໃສ່ປະສົບການຂອງຄະນະບໍລິຫານ ແລະ ປັດໄຈອື່ນໆ ລວມທັງການຄາດຄະເນເຫດການໃນອະນາຄົດທີ່ມີເຫດຜົນພາຍໃຕ້ສະຖານະການ. ຄວາມບໍ່ແນ່ນອນຂອງການຕັ້ງສົມມຸດຖານ ແລະ ການຄາດຄະເນເຫຼົ່ານີ້ ອາດສົ່ງຜົນໃຫ້ມີການດັດແກ້ມູນຄ່າຊັບສິນ ຫຼື ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

2. ພື້ນຖານການກະກຽມ (ຕໍ່)

2.2 *ການພິຈາລະນາ, ປະເມີນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ* (ຕໍ່)

ດຸນພິນິດ

ໃນການປະຕິບັດຕາມນະໂຍບາຍການບັນຊີຂອງບໍລິສັດ, ຄະນະບໍລິຫານຕ້ອງໄດ້ໃຊ້ດຸນພິນິດດັ່ງຕໍ່ໄປນີ້, ເຊິ່ງມີຜົນກະທົບທີ່ສຳຄັນຕໍ່ຕົວເລກທີ່ຖືກຮັບຮູ້ໃນເອກະສານລາຍງານການເງິນ:

ການຈັດປະເພດຊັບສິນ

ບໍລິສັດ ກຳນົດວ່າຊັບສິນຖືກຈັດເຂົ້າເປັນຊັບສິນເພື່ອການລົງທຶນ ຫຼື ຊັບສິນໃນສາງ:

- ຊັບສິນເພື່ອການລົງທຶນປະກອບດ້ວຍ ທີ່ດິນ ແລະ ອາຄານ (ສ່ວນໃຫຍ່ເປັນຫ້ອງການ, ແລະ ໜ່ວຍຄ້າຂາຍຍ່ອຍ) ທີ່ບໍ່ໄດ້ມີໄວ້ເພື່ອນຳໃຊ້ ຫຼື ດຳເນີນງານຂອງບໍລິສັດ, ຫຼື ເພື່ອຂາຍໃນການດຳເນີນງານທຸລະກິດທົ່ວໄປ, ແຕ່ມີໄວ້ເພື່ອຫາລາຍໄດ້ຈາກການເຊົ່າ ແລະ ການເພີ່ມຄ່າຂອງເງິນທຶນ. ບັນດາຕຶກອາຄານເຫລົ່ານີ້ແມ່ນຖືກເຊົ່າໂດຍຜູ້ເຊົ່າ ໂດຍບໍ່ມີຈຸດປະສົງທີ່ຈະຂາຍຕາມການດຳເນີນທຸລະກິດທົ່ວໄປ.
- ຊັບສິນໃນສາງປະກອບດ້ວຍຊັບສິນທີ່ມີໄວ້ເພື່ອຂາຍໃນຮູບແບບທຸລະກິດທົ່ວໄປ. ໂດຍພື້ນຖານແລ້ວ, ນີ້ແມ່ນຊັບສິນປະເພດທີ່ຢູ່ອາໄສທີ່ບໍລິສັດພັດທະນາ ແລະ ຕັ້ງໃຈທີ່ຈະຂາຍກ່ອນ ຫຼື ເມື່ອກໍ່ສ້າງສຳເລັດ.

ນະວັນທີ 31 ທັນວາ 2020, ບໍລິສັດມີພຽງຊັບສິນການລົງທຶນເທົ່ານັ້ນ ເຊິ່ງໄດ້ນຳສະເໜີໃນບົດອະທິບາຍເລກທີ 12.

ສັນຍາເຊົ່າເພື່ອການດຳເນີນງານ - ບໍລິສັດໃນຖານະເປັນຜູ້ໃຫ້ເຊົ່າ

ບໍລິສັດໄດ້ເຮັດສັນຍາເຊົ່າຊັບສິນທາງການຄ້າໃນຊັບສິນເພື່ອການລົງທຶນ. ບໍລິສັດໄດ້ກຳນົດ, ໂດຍອີງໃສ່ການປະເມີນຂໍ້ກຳນົດ ແລະ ເງື່ອນໄຂຂອງຂໍ້ຕົກລົງ ໂດຍພິຈາລະນາຄວາມສ່ຽງ ແລະ ຜົນຕອບແທນທີ່ສຳຄັນຂອງການເປັນເຈົ້າຂອງຊັບສິນເຫຼົ່ານີ້ ແລະ ບັນຊີສຳລັບສັນຍາທີ່ເປັນສັນຍາການດຳເນີນງານ.

ການຄາດຄະເນ ແລະ ການສົມມຸດຖານ

ການສົມມຸດຖານທີ່ສຳຄັນກ່ຽວກັບອະນາຄົດ ແລະ ແຫຼ່ງທີ່ມາສຳຄັນອື່ນໆຂອງການຄາດຄະເນທີ່ບໍ່ແນ່ນອນນະວັນທີຂອງບົດລາຍງານ, ເຊິ່ງມີຄວາມສ່ຽງທີ່ສຳຄັນໃນການປັບປຸງມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນໃນລະຫວ່າງປີການບັນຊີຕໍ່ໄປ, ໄດ້ຖືກອະທິບາຍຂ້າງລຸ່ມນີ້. ບໍລິສັດໄດ້ອີງຕາມການຕັ້ງສົມມຸດຖານ ແລະ ການຄາດຄະເນຂອງຕົນກ່ຽວກັບຕົວກຳນົດການທີ່ມີໃນເວລາທີ່ບົດລາຍງານທາງການເງິນໄດ້ຖືກກະກຽມ. ສະຖານະການ ແລະ ຂໍ້ສົມມຸດທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດ. ເຖິງຢ່າງໃດກໍຕາມ, ອາດຈະມີການປ່ຽນແປງຍ້ອນການປ່ຽນແປງຂອງຕະຫຼາດ ຫຼື ສະຖານະການທີ່ເກີດຂຶ້ນທີ່ເກີນຄວາມສາມາດຄວບຄຸມຂອງບໍລິສັດ. ການປ່ຽນແປງດັ່ງກ່າວແມ່ນສະທ້ອນໃຫ້ເຫັນຂໍ້ສົມມຸດຖານເມື່ອເກີດຂຶ້ນ.

ການປະເມີນມູນຄ່າຊັບສິນເພື່ອການລົງທຶນ

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ ແມ່ນຖືກກຳນົດໂດຍຜູ້ຊ່ຽວຊານດ້ານການປະເມີນມູນຄ່າອະສັງຫາລິມະຊັບໂດຍນຳໃຊ້ເຕັກນິກ ແລະ ຫຼັກການປະເມີນມູນຄ່າທີ່ເປັນທີ່ຍອມຮັບຕາມການເປີດເຜີຍໃນບົດອະທິບາຍເລກທີ 12.

2. ພື້ນຖານການກະກຽມ (ຕໍ່)

2.2 *ການພິຈາລະນາ, ປະເມີນ ແລະ ການເຖິງສົມມຸດຖານທາງການບັນຊີທີ່ສຳຄັນ* (ຕໍ່)

ອາກອນ

ຄວາມບໍ່ແນ່ນອນກ່ຽວກັບການຕີຄວາມໝາຍຂອງລະບຽບອາກອນທີ່ສັບສົນ, ການປ່ຽນແປງຂອງກົດໝາຍອາກອນ ແລະ ຈຳນວນ ແລະ ໄລຍະເວລາຂອງລາຍໄດ້ທີ່ຕ້ອງເສຍອາກອນໃນອະນາຄົດ. ເນື່ອງຈາກລັກສະນະໄລຍະຍາວ ແລະ ຄວາມສັບຊ້ອນຂອງຂໍ້ຕົກລົງສັນຍາທີ່ມີຢູ່, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນໄດ້ຮັບຕົວຈິງ ແລະ ການສົມມຸດຖານທີ່ໄດ້ເຮັດ, ຫຼື ການປ່ຽນແປງໃນອະນາຄົດຕໍ່ກັບການສົມມຸດຖານດັ່ງກ່າວ, ອາດຈຳເປັນຕ້ອງໄດ້ດັດແກ້ລາຍໄດ້ໃນອະນາຄົດ ແລະ ລາຍຈ່າຍທີ່ຕ້ອງເສຍອາກອນ. ບໍລິສັດໄດ້ສ້າງຂໍ້ກຳນົດ, ໂດຍອີງໃສ່ການຄາດຄະເນທີ່ສົມເຫດສົມຜົນ, ເພື່ອຜົນກະທົບທີ່ອາດເກີດຂຶ້ນຈາກການກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນຂອງ ສປປ ລາວ. ຈຳນວນຂອງຂໍ້ກຳນົດດັ່ງກ່າວ ແມ່ນອີງໃສ່ຫຼາຍປັດໃຈ ເຊັ່ນ: ປະສົບການຂອງການກວດສອບອາກອນທີ່ຜ່ານມາ ແລະ ການຕີຄວາມໝາຍທີ່ແຕກຕ່າງຂອງລະບຽບການອາກອນໂດຍໜ່ວຍງານອາກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນທີ່ຮັບຜິດຊອບ. ຄວາມແຕກຕ່າງດັ່ງກ່າວໃນການຕີຄວາມໝາຍອາດຈະເກີດຂຶ້ນກັບເງື່ອນໄຂທີ່ພົ້ນເດັ່ນໃນ ສປປ ລາວ.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ

3.1 *ການຈັດປະເພດ ໝຸນວຽນ ກັບ ບໍ່ໝຸນວຽນ*

ບໍລິສັດນຳສະເໜີຊັບສິນ ແລະ ໜີ້ສິນໃນໃບລາຍງານຖານະການເງິນໂດຍອີງໃສ່ການຈັດປະເພດໝຸນວຽນ/ບໍ່ໝຸນວຽນ. ການຈັດເປັນຊັບສິນໝຸນວຽນກໍຕໍ່ເມື່ອ:

- ຄາດວ່າຈະໄດ້ຮັບຮູ້ ຫຼື ມີຈຸດປະສົງທີ່ຈະຂາຍ ຫຼື ບໍລິໂພກໃນຮອບວຽນການດຳເນີນງານເປັນປົກກະຕິ
- ຖືກຈັດຂຶ້ນໄວ້ເພື່ອຈຸດປະສົງຂອງການຊື້-ຂາຍ
- ຄາດວ່າຈະຮັບຮູ້ໄດ້ພາຍໃນສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ, ຫຼື
- ເງິນສົດ ຫຼື ທຽບເທົ່າເງິນສົດເວັ້ນເສຍແຕ່ຖືກຈຳກັດການແລກປ່ຽນ ຫຼື ນຳໃຊ້ເພື່ອຊຳລະໜີ້ສິນຢ່າງໜ້ອຍສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ.

ບໍລິສັດໄດ້ຈັດປະເພດຊັບສິນອື່ນໆທັງໝົດ ເປັນຊັບສິນບໍ່ໝຸນວຽນ.

ການຈັດເປັນໜີ້ສິນໝຸນວຽນທີ່ກໍຕໍ່ເມື່ອ:

- ຄາດວ່າຈະໄດ້ຮັບການຊຳລະໃນຮອບວຽນການດຳເນີນງານປົກກະຕິ
- ຖືກຈັດຂຶ້ນໄວ້ເພື່ອຈຸດປະສົງຂອງການຊື້-ຂາຍ
- ມີກຳນົດຊຳລະພາຍໃນສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ, ຫຼື
- ບໍ່ມີສິດທີ່ຈະເລື່ອນການຊຳລະໜີ້ເປັນເວລາຢ່າງໜ້ອຍສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ

ລິສັດໄດ້ແບ່ງປະເພດໜີ້ສິນອື່ນໆທັງໝົດ ວ່າແມ່ນໜີ້ສິນບໍ່ໝຸນວຽນ

ຊັບສິນ ແລະ ໜີ້ສິນທີ່ຕິດພັນກັບອາກອນລໍຖ້າຊຳລະສະສາງ ແມ່ນຖືກຈັດປະເພດເປັນຊັບສິນ ແລະ ໜີ້ສິນບໍ່ໝຸນວຽນ.

ນະໂຍບາຍການບັນຊີໃນການຈັດປະເພດຄືນໃໝ່ຂອງຊັບສິນ ແລະ ໜີ້ສິນກັບພາກສ່ວນທີ່ກ່ຽວຂ້ອງໃນບົດອະທິບາຍເລກທີ 3.17

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.2 *ການວັດແທກມູນຄ່ຍຸຕິທຳ*

ບໍລິສັດໄດ້ວັດແທກຊັບສິນເພື່ອການລົງທຶນຕາມມູນຄ່າຍຸຕິທຳ ນະວັນທີຂອງບົດລາຍງານ. ບໍລິສັດບໍ່ມີເຄື່ອງມືທາງການເງິນທີ່ໃຊ້ວັດແທກມູນຄ່າຍຸຕິທຳ. ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບມູນຄ່າຍຸຕິທຳ ສຳລັບລາຍການທີ່ຖືກວັດແທກດ້ວຍ ຫຼື ມູນຄ່າຍຸຕິທຳທີ່ເປີດເຜີຍ, ໄດ້ສັງລວມຕາມບົດອະທິບາຍດັ່ງຕໍ່ໄປນີ້:

- ການເປີດເຜີຍນະໂຍບາຍການບັນຊີ — *ບົດອະທິບາຍເລກທີ 3.5*
- ວິທີການປະເມີນມູນຄ່າ, ການຄາດຄະເນ ແລະ ການສົມມຸດຖານທີ່ສຳຄັນ — *ບົດອະທິບາຍເລກທີ 12*
- ຊັບສິນເພື່ອການລົງທຶນ — *ບົດອະທິບາຍເລກທີ 12*

ມູນຄ່າຍຸຕິທຳ ແມ່ນລາຄາທີ່ຈະໄດ້ຮັບຈາກການຂາຍຊັບສິນ ຫຼື ຈ່າຍເພື່ອໂອນ ໜີ້ສິນໃນການ ດຳເນີນທຸລະກຳ ທີ່ເປັນລະບຽບລະຫວ່າງຜູ້ເຂົ້າຮ່ວມຕະຫຼາດ. ການວັດແທກມູນຄ່າຍຸຕິທຳ ແມ່ນອີງໃສ່ການສົມມຸດຖານວ່າມີທຸລະກຳການຂາຍຊັບສິນ ຫຼື ໂອນໜີ້ສິນດັ່ງກ່າວ:

- ໃນຕະຫຼາດຫຼັກ ສຳລັບຊັບສິນ ຫຼື ໜີ້ສິນ, ຫຼື
- ໃນກໍລະນີທີ່ບໍ່ມີຕະຫຼາດຫຼັກ, ໃນຕະຫຼາດທີ່ໄດ້ປຽບຫຼາຍທີ່ສຸດ ສຳລັບຊັບສິນ ຫຼື ໜີ້ສິນ

ຕະຫຼາດຫຼັກ ຫຼື ຕະຫຼາດທີ່ໄດ້ປຽບທີ່ສຸດແມ່ນບໍລິສັດຕ້ອງເຂົ້າເຖິງໄດ້.

ມູນຄ່າຍຸຕິທຳຂອງສິນຊັບ ຫຼື ໜີ້ສິນ ແມ່ນຖືກວັດແທກໂດຍນຳໃຊ້ສົມມຸດຖານທີ່ຜູ້ເຂົ້າຮ່ວມຕະຫຼາດຈະນຳໃຊ້ໃນເວລາທີ່ກຳນົດລາຄາຂອງຊັບສິນ ຫຼື ໜີ້ສິນ, ໂດຍສົມມຸດວ່າຜູ້ເຂົ້າຮ່ວມຕະຫຼາດປະຕິບັດເພື່ອຜົນປະໂຫຍດທາງເສດຖະກິດສູງສຸດຂອງພວກເຂົາ.

ການວັດແທກມູນຄ່າຍຸຕິທຳຂອງຊັບສິນທີ່ບໍ່ແມ່ນການເງິນໄດ້ຄຳນຶງເຖິງຄວາມສາມາດຂອງຜູ້ເຂົ້າຮ່ວມຕະຫຼາດໃນການສ້າງຜົນປະໂຫຍດທາງເສດຖະກິດໂດຍການ ນຳໃຊ້ຊັບສິນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ ຫຼື ການຂາຍໃຫ້ຜູ້ເຂົ້າຮ່ວມຕະຫຼາດອື່ນທີ່ຈະນຳໃຊ້ຊັບສິນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ.

ບໍລິສັດນຳໃຊ້ເຕັກນິກການປະເມີນມູນຄ່າທີ່ເໝາະສົມຕາມສະພາບການ ແລະ ເພື່ອໃຫ້ມີຂໍ້ມູນທີ່ພຽງພໍໃນການວັດແທກມູນຄ່າທີ່ຍຸຕິທຳ, ເພີ່ມການນຳໃຊ້ທີ່ກ່ຽວຂ້ອງ, ສາມາດສັງເກດໄດ້ ແລະ ຫຼຸດການໃຊ້ຂໍ້ມູນທີ່ບໍ່ສາມາດສັງເກດໄດ້.

ຊັບສິນ ແລະ ໜີ້ສິນທັງໝົດ ທີ່ມູນຄ່າຍຸຕິທຳຖືກວັດແທກ ຫຼື ເປີດເຜີຍໃນເອກະສານລາຍງານການທາງເງິນຖືກຈັດປະເພດພາຍໃນ ລຳດັບມູນຄ່າຍຸຕິທຳ, ເຊິ່ງອະທິບາຍດັ່ງຕໍ່ໄປນີ້, ໂດຍອີງຕາມຂໍ້ມູນລະດັບຕ່ຳສຸດທີ່ສຳຄັນໃນການວັດມູນຄ່າຍຸຕິທຳທັງໝົດ:

- ລະດັບ 1 - ອ້າງອີງລາຄາຕະຫຼາດ (ບໍ່ມີການດັດແກ້) ໃນຕະຫຼາດທີ່ມີການໃຊ້ງານ ສຳລັບສິນຊັບ ຫຼື ໜີ້ສິນທີ່ຄ້າຍຄືກັນ
- ລະດັບ2 - ເຕັກນິກການປະເມີນມູນຄ່າຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸຕິທຳ ແມ່ນສາມາດສັງເກດເຫັນໂດຍທາງກົງ ຫຼື ໂດຍທາງອ້ອມ
- ລະດັບ 3 - ເຕັກນິກການປະເມີນມູນຄ່າຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸຕິທຳແມ່ນບໍ່ສາມາດເຫັນໄດ້

ສຳລັບຊັບສິນ ແລະ ໜີ້ສິນທີ່ຖືກຮັບຮູ້ໃນເອກະສານລາຍງານການເງິນດ້ວຍມູນຄ່າຍຸຕິທຳ ບົນພື້ນຖານການເກີດຂຶ້ນເປັນປະຈຳບໍລິສັດ ກຳນົດວ່າການໂອນຍ້າຍເກີດຂຶ້ນລະຫວ່າງລະດັບໃນລຳດັບຊັ້ນໂດຍມີການປະເມີນການຈັດປະເພດຄືນໃໝ່ (ອີງໃສ່ຂໍ້ມູນໃນລະດັບຕ່ຳສຸດເຊິ່ງມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸຕິທຳທັງໝົດ)ໃນປີທີ່ສິ້ນສຸດຂອງບົດລາຍງານແຕ່ລະໄລຍະ.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 *ອາກອນ*

ອາກອນກຳໄລໃນປັດຈຸບັນ

ຊັບສິນ ແລະ ໜີ້ສິນອາກອນກຳໄລໃນປັດຈຸບັນແມ່ນຖືກວັດແທກຕາມຈຳນວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ເຈົ້າໜ້າທີ່ ສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ໃຊ້ໃນການຄິດໄລ່ຈຳນວນເງິນດັ່ງກ່າວຕາມຂໍ້ກຳນົດທາງ ກົດໝາຍໂດຍທົ່ວໄປ, ນະວັນທີຂອງບົດລາຍງານ.

ອາກອນກຳໄລໃນປັດຈຸບັນທີ່ກ່ຽວຂ້ອງກັບບັນດາລາຍການຂອງຜູ້ຖືຮຸ້ນໂດຍກົງ ຈະຮັບຮູ້ໃນສ່ວນຂອງຜູ້ຖືຮຸ້ນ ແລະ ບໍ່ໄດ້ຢູ່ ໃນບົດລາຍງານຜົນການດຳເນີນງານນອກການທຸລະກິດ. ຄະນະບໍລິຫານຈະປະເມີນສະຖານະການເກັບຄືນອາກອນເປັນໄລຍະ ຕາມກົດລະ ບຽບຂອງອາກອນ ພາຍໃຕ້ການຕີຄວາມໝາຍ ແລະ ສ້າງຂໍ້ກຳນົດຕ່າງໆທີ່ເໝາະສົມ.

ອາກອນລໍຖ້າຊຳລະສະສາງ

ອາກອນລໍຖ້າຊຳລະສະສາງແມ່ນຄິດໄລ່ໂດຍໃຊ້ວິທີໜີ້ສິນຕາມໃບລາຍງານຖານະການເງິນ ຈາກຄວາມແຕກຕ່າງຊົ່ວຄາວນະ ວັນທີຂອງໃບລາຍງານການຖານະການເງິນລະຫວ່າງພື້ນຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ມູນຄ່າຕາມບັນຊີສຳລັບ ຈຸດປະສົງການລາຍງານທາງການເງິນ ນະວັນທີລາຍງານ.

ໜີ້ສິນອາກອນລໍຖ້າຊຳລະສະສາງ ແມ່ນໄດ້ຖືກຮັບຮູ້ສຳລັບຄວາມແຕກຕ່າງຊົ່ວຄາວທີ່ຕ້ອງເສຍອາກອນທັງໝົດ, ຍົກເວັ້ນ:

- ໃນກໍລະນີທີ່ໜີ້ສິນອາກອນລໍຖ້າຊຳລະສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກຳນະວັນ ທີ່ທຸລະກຳສິ່ງຜົນກະທົບຕໍ່ກຳໄລທາງການບັນຊີ ແລະ ກຳໄລ ຫຼື ຂາດທຶນທາງອາກອນ; ແລະ
- ໃນສ່ວນຄວາມແຕກຕ່າງຊົ່ວຄາວທີ່ຕ້ອງເສຍອາກອນ ມີຄວາມກ່ຽວຂ້ອງກັບການລົງທຶນໃນສາຂາຂອງບໍລິສັດທີ່ ສາມາດຄວບຄຸມເວລາໃນການເກັບຄືນ ຂອງຄວາມແຕກຕ່າງຊົ່ວຄາວ ແລະ ມີຄວາມເປັນໄປໄດ້ທີ່ວ່າ ສ່ວນຕ່າງ ຊົ່ວຄາວຈະບໍ່ສາມາດເກັບຄືນມາໄດ້ໃນອະນາຄົດ.

ຊັບສິນອາກອນລໍຖ້າຊຳລະສະສາງ ແມ່ນຖືກຮັບຮູ້ສຳລັບຄວາມແຕກຕ່າງຊົ່ວຄາວທີ່ຫັກອາກອນ, ການຍົກຫັກຕໍ່ຂອງສິນເຊື່ອ ອາກອນທີ່ບໍ່ໄດ້ໃຊ້ ແລະ ຂາດທຶນອາກອນທີ່ບໍ່ໄດ້ໃຊ້, ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າ ກຳໄລທາງອາກອນຈະສາມາດໃຊ້ ໄດ້ກັບຄວາມແຕກຕ່າງຊົ່ວຄາວທີ່ໃຊ້ຫັກອາກອນ, ການຍົກຫັກຕໍ່ຂອງສິນເຊື່ອອາກອນທີ່ບໍ່ໄດ້ໃຊ້ ແລະ ຂາດທຶນທາງ ອາກອນທີ່ບໍ່ໄດ້ໃຊ້ ສາມາດນຳໃຊ້ໄດ້, ຍົກເວັ້ນ:

- ໃນກໍລະນີທີ່ຊັບສິນອາກອນລໍຖ້າຊຳລະສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກຳທີ່ສິ່ງ ຜົນກະທົບຕໍ່ກຳໄລທາງການບັນຊີ ແລະ ກຳໄລ ຫຼື ຂາດທຶນທາງອາກອນ; ແລະ
- ໃນສ່ວນຂອງຄວາມແຕກຕ່າງຊົ່ວຄາວທີ່ໃຊ້ຫັກອາກອນ ມີຄວາມກ່ຽວຂ້ອງກັບການລົງທຶນໃນສາຂາຂອງບໍລິສັດ. ຊັບ ສິນອາກອນລໍຖ້າຊຳລະສະສາງ ແມ່ນຖືກຮັບຮູ້ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າ ສ່ວນຕ່າງຊົ່ວຄາວຈະສາມາດເກັບຄືນ ໄດ້ໃນອະນາຄົດ ແລະ ກຳໄລທາງອາກອນຈະສາມາດໃຊ້ໄດ້ກັບຄວາມແຕ່ກຕ່າງຊົ່ວຄາວທີ່ສາມາດນຳໃຊ້ໄດ້.

ມູນຄ່າທາງບັນຊີຂອງຊັບສິນອາກອນລາຍໄດ້ເຍື້ອນຊຳລະ ແມ່ນຖືກທົບທວນຄືນນະມື້ທີ່ອອກໃບລາຍງານຖານະການເງິນແຕ່ ລະເທື່ອ ແລະ ຈະຫຼຸດລົງຕາມກໍລະນີທີ່ບໍ່ໜ້າຈະເປັນໄປໄດ້ທີ່ຈະມີກຳໄລທາງອາກອນພຽງພໍທີ່ຈະອະນຸຍາດໃຫ້ໄດ້ເກັບຄືນທັງ ໝົດ ຫຼື ບາງສ່ວນຂອງຊັບສິນ. ຊັບສິນອາກອນລາຍໄດ້ເຍື້ອນຊຳລະກ່ອນໜ້ານີ້ທີ່ບໍ່ໄດ້ຖືກຮັບຮູ້ ຈະຖືກປະເມີນຂຶ້ນໃໝ່ ໃນ ແຕ່ລະເທື່ອຂອງນະມື້ອອກໃບລາຍງານຖານະການເງິນ ແລະ ໄດ້ຖືກຮັບຮູ້ໃນກໍລະນີທີ່ມີຄວາມເປັນໄປໄດ້ໃນອະນາຄົດວ່າ ກຳ ໄລທາງອາກອນ ຈະອະນຸຍາດໃຫ້ຊັບສິນອາກອນລໍຖ້າຊຳລະສະສາງສາມາດເກັບຄືນໄດ້.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 *ອາກອນ* (ຕໍ່)

ອາກອນລ່ວງໜ້າຊຳລະສະສາງ (ຕໍ່)

ຊັບສິນ ແລະ ໜີ້ສິນອາກອນລາຍໄດ້ເຍື້ອນຊຳລະ ແມ່ນຖືກວັດແທກໂດຍໃຊ້ອັດຕາອາກອນທີ່ຄາດວ່າຈະນຳໃຊ້ໃນປີເມື່ອມີການຮັບຮູ້ຊັບສິນ ຫຼື ໜີ້ສິນຕາມອັດຕາອາກອນ ແລະ ອັດຕາຕາມກົດໝາຍທີ່ມີຜົນບັງຄັບໃຊ້ນະມື້ອອກໃບລາຍງານຖານະການເງິນ.

ອາກອນລາຍໄດ້ເຍື້ອນຊຳລະ ຈະຖືກຄິດໄລ່ ຫຼື ໂອນໄປໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນແຕ່ມີການພົວພັນໂດຍກົງກັບສ່ວນຂອງຜູ້ຖືຮຸ້ນ, ໃນກໍລະນີທີ່ອາກອນລ່ວງໜ້າຊຳລະສະສາງຖືກແບ່ງໂດຍຜູ້ຖືຮຸ້ນ.

ຊັບສິນ ແລະ ໜີ້ສິນອາກອນລ່ວງໜ້າຊຳລະສະສາງ ແມ່ນຫັກລ້າງກັນ, ຖ້າຫາກວ່າມີການບັງຄັບໃຊ້ຕາມກົດໝາຍໃນການກຳນົດຊັບສິນທາງອາກອນປັດຈຸບັນກັບໜີ້ສິນທາງອາກອນລາຍໄດ້ປັດຈຸບັນ ແລະ ອາກອນລ່ວງໜ້າຊຳລະສະສາງທີ່ກ່ຽວຂ້ອງກັບນິຕິບຸກຄົນທີ່ມີການເກັບພາສີຄືກັນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນດຽວກັນ:

- ບໍ່ວ່າຈະເປັນນິຕິບຸກຄົນທີ່ຕ້ອງເສຍພາສີດຽວກັນ;
- ຫຼື ໃນເວລາທີ່ບໍລິສັດຕັ້ງໃຈທີ່ຈະຊຳລະໜີ້ສິນ ແລະ ຊັບສິນທາງອາກອນປັດຈຸບັນ ບົນພື້ນຖານວຸດທິ ຫຼື ຮັບຮູ້ຊັບສິນ ແລະ ຊຳລະໜີ້ສິນພ້ອມກັນ, ແຕ່ລະໄລຍະຕໍ່ໜ້າ ທີ່ຄາດວ່າຈະຊຳລະ ຫຼື ເກັບຄືນຊັບສິນ ແລະ ໜີ້ສິນອາກອນລ່ວງໜ້າຊຳລະສະສາງທີ່ເປັນຈຳນວນເງິນສຳຄັນ.

ອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມຂອງລາຍຮັບຄ່າເຊົ່າ ແລະ ລາຍຮັບອື່ນໆເປັນພຽງແຕ່ການຮັບຮູ້ເທົ່ານັ້ນ, ໄດ້ມີການແຈ້ງມອບເສຍອາກອນ ຫຼື ຈ່າຍອາກອນມູນຄ່າເພີ່ມສຳລັບລູກຄ້າທີ່ໄດ້ຮັບໃບເກັບເງິນອາກອນມູນຄ່າເພີ່ມຈາກບໍລິສັດ.

ອີງຕາມນະໂຍບາຍການບັນຊີສຳລັບ ອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງກັບສັນຍາການຮ່ວມທຸລະກິດ ແມ່ນໄດ້ຖືການຳສະເໜີໃນບົດອະທິບາຍເລກທີ 3.14.

ການດັດແກ້ຕົວເລກໜີ້ຕ້ອງສົ່ງທາງອາກອນສຳລັບປີທີ່ຜ່ານມາ ແມ່ນອີງໃສ່ຜົນຂອງບົດໄລ່ລ່ຽງອາກອນທີ່ໄດ້ບັນທຶກໂດຍກົງເຂົ້າກຳໄລສະສົມ.

3.4 *ເງິນຕາຕ່າງປະເທດ*

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີເປັນສະກຸນເງິນກີບ, ເຊິ່ງເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງບໍລິສັດ. ການເຮັດທຸລະກຳທີ່ເປັນສະກຸນເງິນຕ່າງປະເທດໃນເບື້ອງຕົ້ນບໍລິສັດແມ່ນບັນທຶກໂດຍການນຳໃຊ້ອັດຕາແລກປ່ຽນທີ່ວໄປນະມື້ທີ່ເກີດທຸລະກຳທຳອິດເພື່ອຮັບຮູ້. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າຄືນໃໝ່ເປັນສະກຸນເງິນຫຼັກໃນມື້ຂອງບົດລາຍງານ.

ສ່ວນຕ່າງທີ່ເກີດຂຶ້ນໃນການຊຳລະສະສາງ ຫຼື ຕີມູນຄ່າລາຍການທີ່ເປັນເງິນຕາຕ່າງປະເທດໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.4 *ເງິນຕາຕ່າງປະເທດ* (ຕໍ່)

ລາຍການທີ່ບໍ່ແມ່ນເງິນຖືກວັດແທກຈາກມູນຄ່າຕົ້ນທຶນເດີມໃນສະກຸນເງິນຕາຕ່າງປະເທດ ແມ່ນຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີຂອງທຸລະກຳເບື້ອງຕົ້ນ. ລາຍການທີ່ບໍ່ແມ່ນເງິນທີ່ຖືກວັດແທກໃນມູນຄ່າຍຸຕິທຳໃນສະກຸນເງິນຕາຕ່າງປະເທດ ແລະ ໄດ້ຖືກຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີກຳນົດມູນຄ່າຍຸຕິທຳ.

3.5 *ຊັບສິນເພື່ອການລົງທຶນ*

ຊັບສິນເພື່ອການລົງທຶນປະກອບດ້ວຍຊັບສິນທີ່ກິດຈະການມີໄວ້ຄອບຄອງເພື່ອຫາຜົນປະໂຫຍດຈາກລາຍໄດ້ຄ່າເຊົ່າ ຫຼື ການເພີ່ມຂຶ້ນຂອງມູນຄ່າຊັບສິນ ຫຼື ທັງສອງຢ່າງ. ຊັບສິນທີ່ຖືໄວ້ຄອບຄອງເພື່ອໃຫ້ເຊົ່າແມ່ນຖືກຈັດປະເພດເປັນຊັບສິນເພື່ອການລົງທຶນເມື່ອມີລາຍໄດ້ຈາກຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຊັບສິນ ຫຼື ທັງສອງຢ່າງ, ແທນທີ່ຈະມີໄວ້ສຳລັບຂາຍຕາມການດຳເນີນງານຂອງທຸລະກິດປົກກະຕິ, ຫຼື ເພື່ອໃຊ້ໃນການຜະລິດ ຫຼື ໃຊ້ໃນການບໍລິຫານງານ.

ຊັບສິນເພື່ອລົງທຶນແມ່ນຖືກປະເມີນຕາມຕົ້ນທຶນທີ່ເກີດຂຶ້ນເບື້ອງຕົ້ນ, ເຊິ່ງປະກອບດ້ວຍທຸລະກຳຕາມຕົ້ນທຶນ. ທຸລະກຳຕາມຕົ້ນທຶນປະກອບດ້ວຍຄ່າພາສີໃນການໂອນຊັບສິນ, ຄ່າທຳນຽມວິຊາຊີບສຳລັບການບໍລິການທາງກົດໝາຍ ແລະ ລາຍຈ່າຍທີ່ຈຳເປັນເພື່ອເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ. ມູນຄ່າຕາມບັນຊີແມ່ນລວມທັງຕົ້ນທຶນການປ່ຽນແປງສ່ວນໃດໜຶ່ງຂອງຊັບສິນເພື່ອການລົງທຶນທີ່ມີຢູ່ນະເວລາທີ່ຕົ້ນທຶນນັ້ນເກີດຂຶ້ນ ຖ້າຫາກວ່າເປັນໄດ້ຕາມເກນການຮັບຮູ້.

ພາຍຫຼັງການຮັບຮູ້ເບື້ອງຕົ້ນ, ຊັບສິນເພື່ອການລົງທຶນແມ່ນຈະຖືກບັນທຶກໂດຍມູນຄ່າຍຸຕິທຳ, ເຊິ່ງສະທ້ອນເຖິງສະພາບຕະຫຼາດນະມື້ຂອງການລາຍງານ. ກຳໄລ ຫຼື ຂາດທຶນທີ່ເກີດຂຶ້ນຈາກການປ່ຽນແປງມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນແມ່ນໄດ້ລວມຢູ່ໃນ ກຳໄລ ຫຼື ຂາດທຶນໃນໄລຍະທີ່ເກີດຂຶ້ນ ລວມເຖິງຜົນກະທົບທາງອາກອນທີ່ກ່ຽວຂ້ອງ.

ການໂອນແມ່ນເກີດຂຶ້ນ (ຫຼື ເມື່ອ) ຊັບສິນເພື່ອລົງທຶນເມື່ອມີການປ່ຽນແປງການນຳໃຊ້. ສຳລັບການໂອນຈາກຊັບສິນເພື່ອລົງທຶນມາເປັນຊັບສິນທີ່ຖືຄອງໄວ້ໂດຍເຈົ້າຂອງ, ຕົ້ນທຶນທີ່ຄາດວ່າຈະໄດ້ຮັບຈາກບັນຊີພາຍຫຼັງແມ່ນມູນຄ່າຍຸຕິທຳນະມື້ທີ່ມີການປ່ຽນແປງການໃຊ້ງານ.

ຊັບສິນເພື່ອການລົງທຶນແມ່ນຖືກຕັດລາຍການເມື່ອມີການສະສາງ ຫຼື ເລີກໃຊ້ຊັບສິນນັ້ນຢ່າງຖາວອນ ແລະ ບໍ່ຄາດວ່າຈະໄດ້ຮັບຜົນປະໂຫຍດທາງທຸລະກິດໃນອະນາຄົດຈາກການສະສາງຊັບສິນ. ຄວາມແຕກຕ່າງລະຫວ່າງຂັ້ນຕອນການສະສາງສຸດທິ ແລະ ມູນຄ່າຕາມບັນຊີຂອງຊັບສິນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນໃນໄລຍະຂອງການຕັດລາຍການ.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.6 ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

3.7 ໜີ້ຕ້ອງຮັບຄ່າເຊົ່າ ແລະ ອື່ນໆ

ໜີ້ຕ້ອງຮັບຄ່າເຊົ່າ ແລະ ອື່ນໆແມ່ນຖືກຮັບຮູ້ຕາມໃບຮຽກເກັບຕົ້ນສະບັບ ຍົກເວັ້ນເມື່ອມູນຄ່າຂອງເງິນມີຄວາມສຳຄັນ, ເຊິ່ງໃນກໍລະນີໜີ້ຕ້ອງຮັບແມ່ນຮັບຮູ້ໃນມູນຄ່າຍຸຕິທຳ ແລະ ຫຼັງຈາກວັດແທກຕາມຕົ້ນທຶນຄ່າເສື່ອມມູນຄ່າ.

ເງິນແຮຈະຖືກບັນທຶກເມື່ອມີຫຼັກຖານທີ່ຊັດເຈນວ່າ ບໍລິສັດຈະບໍ່ສາມາດເກັບຄືນໄດ້ເຕັມຈຳນວນ.

ຍອດເຫຼືອຈະຖືກຕັດອອກເມື່ອຄວາມເປັນໄປໄດ້ຂອງການເກັບຄືນໄດ້ຖືກປະເມີນວ່າມີໂອກາດໜ້ອຍຫຼາຍ.

3.8 ເງິນມັດຈຳຄ່າເຊົ່າ

ໜີ້ເງິນມັດຈຳຄ່າເຊົ່າແມ່ນຖືກຮັບຮູ້ເບື້ອງຕົ້ນຕາມມູນຄ່າຍຸຕິທຳ ແລະ ຫຼັງຈາກທີ່ວັດແທກຕາມຈຳນວນທີ່ຕ້ອງຈ່າຍໃນອະນາຄົດ.

ສ່ວນຜົດຕ່າງລະຫວ່າງມູນຄ່າຍຸຕິທຳເບື້ອງຕົ້ນ ແລະ ຈຳນວນເງິນສ່ວນໜ້ອຍທີ່ລວມຢູ່ໃນລາຍຮັບຄ່າເຊົ່າໃນການດຳເນີນງານ ແລະ ຖືກຮັບຮູ້ຕາມວິທີເສັ້ນຊື່ຕໍ່ໄລຍະເວລາເຊົ່າ.

3.9 ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມ

ເງິນກູ້ ແລະ ການກູ້ຢືມທັງໝົດແມ່ນຖືກຮັບຮູ້ຕາມມູນຄ່າທີ່ໄດ້ຮັບຫັກຕົ້ນທຶນທຸລະກຳທີ່ກ່ຽວຂ້ອງໂດຍກົງ. ພາຍຫຼັງການຮັບຮູ້ໃນເບື້ອງຕົ້ນ ເງິນກູ້ ແລະ ການກູ້ຢືມແມ່ນໄດ້ຮັບການວັດແທກມູນຄ່າທີ່ຕ້ອງຈ່າຍໃນອະນາຄົດ. ອັດຕາດອກເບ້ຍທີ່ເກີດຂຶ້ນຈາກເງິນກູ້ ແລະ ການກູ້ຢືມແມ່ນຈະຖືກຄິດໄລ່ຈາກອັດຕາດອກເບ້ຍທີ່ກຳນົດຕາມສັນຍາ.

3.10 ສັນຍາເຊົ່າ

ການກຳນົດວ່າຂໍ້ຕົກລົງແມ່ນ (ຫຼື ມີ) ການເຊົ່າ ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງນະວັນທີເລີ່ມຂອງສັນຍາເຊົ່າ. ຂໍ້ຕົກລົງແມ່ນ ຫຼື ເປັນສັນຍາເຊົ່າ ຖ້າຫາກວ່າການປະຕິບັດຂອງຂໍ້ຕົກລົງຂຶ້ນກັບການໃຊ້ຊັບສິນສະເພາະ ຫຼື ຂໍ້ຕົກລົງທີ່ສະແດງເຖິງສິດໃນການນຳໃຊ້ຊັບສິນ, ເຖິງແມ່ນວ່າສິດນັ້ນຈະບໍ່ລະບຸຊັດເຈນໃນຂໍ້ຕົກລົງ.

ບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ບໍລິສັດບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຄວາມເປັນເຈົ້າໃນຊັບສິນໄດ້ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານ. ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຈາກການເຈລະຈາ ແລະ ການດຳເນີນການເຊົ່າຈະລວມຢູ່ໃນມູນຄ່າຕາມບັນຊີຂອງຊັບສິນທີ່ເຊົ່າ ແລະ ຮັບຮູ້ຕາມໄລຍະຂອງສັນຍາເຊົ່າໂດຍໃຊ້ຫຼັກເກນດຽວກັບລາຍຮັບຄ່າເຊົ່າ. ຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຮັບໃນໄລຍະທີ່ໄດ້ລາຍຮັບ.

3.11 ຄັງສຳຮອງ

ອີງຕາມມາດຕາ 156 ຂອງກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ບໍລິສັດຕ້ອງຫັກເງິນແຮ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າຄັງສຳຮອງຕາມກົດໝາຍ. ເມື່ອຄັງສັງຮອງດັ່ງກ່າວບັນລຸ 50% ຂອງເງິນທຶນຈົດທະບຽນ, ບໍລິສັດອາດຈະເລື່ອນການສຳຮອງດັ່ງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດ.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.11 ຄັງສຳຮອງ (ຕໍ່)

ການຈັດສັນກຳໄລເຂົ້າຄັງເພື່ອຂະຫຍາຍກິດຈະການແມ່ນສອດຄ່ອງກັບມາດຕາ 16 ຂອງຂໍ້ກຳນົດຂອງບໍລິສັດ. ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020, ບໍລິສັດໄດ້ສຳຮອງ 10% ຂອງກຳໄລເຂົ້າຄັງເພື່ອຂະຫຍາຍທຸລະກິດ.

3.12 ການຮັບຮູ້ລາຍຮັບ

ລາຍຮັບແມ່ນໄດ້ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງເສດຖະກິດຈະໄຫຼເຂົ້າບໍລິສັດ ແລະ ລາຍຮັບສາມາດວັດແທກໄດ້ຢ່າງໜ້າເຊື່ອຖື ບໍ່ວ່າຈະໄດ້ຮັບການຊຳລະເງິນຕອນໃດ. ລາຍຮັບແມ່ນຖືກວັດແທກດ້ວຍມູນຄ່າຍຸຕິທຳຕາມການພິຈາລະນາທີ່ໄດ້ຮັບ ຫຼື ຄ້າງຮັບ, ໂດຍຄຳນຶງເຖິງເງື່ອນໄຂການຊຳລະເງິນຕາມສັນຍາ ແລະ ບໍ່ລວມພາສີ ຫຼື ອາກອນ.

ເງື່ອນໄຂການຮັບຮູ້ສະເພາະທີ່ລະບຸໄວ້ຂ້າງລຸ່ມນີ້ຕ້ອງເປັນໄປຕາມເງື່ອນໄຂ ກ່ອນທີ່ຈະຮັບຮູ້ລາຍຮັບ.

ລາຍຮັບຄ່າເຊົ່າ

ບໍລິສັດແມ່ນຜູ້ໃຫ້ເຊົ່າໃນການເຊົ່າເພື່ອການດຳເນີນງານ. ລາຍຮັບຄ່າເຊົ່າທີ່ເກີດຂຶ້ນຈາກການເຊົ່າເພື່ອການດຳເນີນງານໃນຊັບສິນເພື່ອການລົງທຶນແມ່ນບັນທຶກເປັນລາຍໄດ້ຕາມວິທີເສັ້ນຊື່ໃນໄລຍະເວລາການເຊົ່າ ແລະ ລວມຢູ່ໃນລາຍຮັບໃນໃບລາຍງານຜົນການດຳເນີນງານ ເນື່ອງຈາກລັກສະນະການດຳເນີນງານ, ຍົກເວັ້ນລາຍຮັບຈາກຄ່າເຊົ່າທີ່ບໍ່ແນ່ນອນທີ່ໄດ້ຖືກຮັບຮູ້ເມື່ອເກີດຂຶ້ນ.

ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຂຶ້ນໃນການເຈລະຈາ ແລະ ການຕົກລົງໃນການເຊົ່າເພື່ອການດຳເນີນງານແມ່ນໄດ້ຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາການເຊົ່າຕາມພື້ນຖານດຽວກັນກັບລາຍຮັບຈາກການເຊົ່າ.

ແຮງຈູງໃຈໃນການເຊົ່າຂອງຜູ້ເຊົ່າໄດ້ຖືກຮັບຮູ້ເປັນການຫຼຸດລົງຂອງລາຍຮັບຈາກລາຍຮັບຄ່າເຊົ່າໂດຍວິທີເສັ້ນຊື່ຕະຫຼອດໄລຍະເວລາຂອງອາຍຸສັນຍາເຊົ່າ. ໄລຍະເວລາການເຊົ່າແມ່ນໄລຍະເວລາທີ່ຍົກເລີກບໍ່ໄດ້ ພ້ອມກັບໄລຍະເວລາເພີ່ມເຕີມທີ່ຜູ້ເຊົ່າມີທາງເລືອກທີ່ຈະສືບຕໍ່ການເຊົ່າ, ໃນເວລາຮັບຮູ້ການເຊົ່າ, ທີ່ຄະນະອຳນວຍການແມ່ນມີຄວາມແນ່ໃຈຢ່າງສົມເຫດສົມຜົນວ່າຜູ້ເຊົ່າຈະໃຊ້ຕົວເລືອກນັ້ນ.

ຈຳນວນເງິນທີ່ໄດ້ຮັບຈາກຜູ້ເຊົ່າເພື່ອຢຸດຕິສັນຍາການເຊົ່າ ຫຼື ຄ່າຊົດເຊີຍຄວາມເສຍຫາຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນເວລາທີ່ສິດທີ່ຈະໄດ້ຮັບນັ້ນເກີດຂຶ້ນ.

ລາຍຮັບຈາກການດຳເນີນງານອື່ນໆ

ລາຍຮັບຈາກການດຳເນີນງານອື່ນໆປະກອບດ້ວຍລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາ ແລະ ການຈັດກິດຈະກຳ ເຊິ່ງຖືກຮັບຮູ້ໃນໄລຍະການໃຫ້ບໍລິການ.

ລາຍຮັບຈາກສັນຍາການຮ່ວມມືທຸລະກິດ ("BCC")

ລາຍໄດ້ຈາກສັນຍາການຮ່ວມມືທຸລະກິດ ("BCC") ແມ່ນຖືກຮັບຮູ້ຕາມນະໂຍບາຍການບັນຊີທີ່ສະແດງໃນບົດອະທິບາຍເລກທີ 3.14.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.12 *ການຮັບຮູ້ລາຍຮັບ* (ຕໍ່)

ລາຍຮັບດອກເບ້ຍ

ລາຍຮັບດອກເບ້ຍຖືກຮັບຮູ້ເພາະວ່າເປັນການຄ້າງຮັບໂດຍນຳໃຊ້ວິທີການອັດຕາດອກເບ້ຍທີ່ແທ້ຈິງ (EIR). ອັດຕາດອກເບ້ຍທີ່ແທ້ຈິງ ແມ່ນອັດຕາທີ່ໃຊ້ໃນການຄິດຫຼຸດປະມານການເງິນສິດຮັບ ຫຼື ຈ່າຍໃນອະນາຄົດຕະຫຼອດອາຍຸທີ່ຄາດໄວ້ຂອງເຄື່ອງມືທາງການເງິນ ຫຼື ໄລຍະເວລາທີ່ສັ້ນກວ່າ, ຕາມເໝາະສົມກັບມູນຄ່າທາງບັນຊີສຸດທິຂອງຊັບສິນທາງການເງິນ. ລາຍຮັບດອກເບ້ຍແມ່ນຢູ່ໃນລາຍຮັບການເງິນທີ່ສະແດງຢູ່ໃນໃບລາຍງານຜົນການດຳເນີນງານ.

3.13 *ຕົ້ນທຶນການກູ້ຢືມ*

ຕົ້ນທຶນການກູ້ຢືມທີ່ກ່ຽວຂ້ອງໂດຍກົງກັບການໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ຕ້ອງໃຊ້ໄລຍະເວລາ ເພື່ອພ້ອມສຳລັບການໃຊ້ ຫຼື ການຂາຍໄດ້ຖືກບັນທຶກເປັນສ່ວນໜຶ່ງຂອງຕົ້ນທຶນຊັບສິນນັ້ນ. ຕົ້ນທຶນການກູ້ຢືມອື່ນໆທັງໝົດຈະເປັນຄ່າໃຊ້ຈ່າຍໃນໄລຍະທີ່ເກີດຂຶ້ນ. ຕົ້ນທຶນການກູ້ຢືມປະກອບດ້ວຍດອກເບ້ຍ ແລະ ຕົ້ນທຶນອື່ນທີ່ເກີດຂຶ້ນຈາກການກູ້ຢືມເງິນ.

3.14 ສັນຍາການຮ່ວມມືທຸລະກິດ *("BCC")* ໃນຮູບແບບການດຳເນີນງານທີ່ຄວບຄຸມຮ່ວມກັນ

ສັນຍາການຮ່ວມມືທຸລະກິດແມ່ນການດຳເນີນງານທີ່ບໍ່ໄດ້ປະກອບເປັນໜ່ວຍງານໃໝ່, ຂາຮຸ້ນຂອງ BCC ແມ່ນມີພັນທະ ແລະ ມີສິດໄດ້ຮັບຜົນປະໂຫຍດຕາມທີ່ໄດ້ລະບຸໄວ້ໃນສັນຍາ. ກິດຈະກຳຂອງ BCC ແມ່ນປະຕິບັດພ້ອມກັນກັບກິດຈະກຳການດຳເນີນງານປະຈຳຂອງຂາຮຸ້ນ.

ບໍລິສັດໄດ້ຮັບຮູ້ລາຍຮັບຈາກ BCC ແລະ ພາລະຜູກພັນທາງອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງຕາມລາຍຮັບສຸດທິຕາມສັນຍາ, ເຊິ່ງເປັນຄວາມແຕກຕ່າງກັນລະຫວ່າງລາຍຮັບລວມ ແລະ ສັດສ່ວນກຳໄລຂອງຂາຮຸ້ນອື່ນຂອງ BCC.

ຈາກນັ້ນບໍລິສັດຮັບຮູ້ໜີ້ສິນຕາມສັນຍາເຊົ່າຊື້ທີ່ມີກັບລູກໜີ້ການຄ້າສຸດທິ. ສຳລັບອາກອນມູນຄ່າເພີ່ມເກີດຂຶ້ນຈາກສັນຍາທີ່ໄດ້ແຈ້ງເສຍອາກອນ ແລະ ຈ່າຍຕາມລາຍຮັບສຸດທິທີ່ໄດ້ຮັບຈາກບໍລິສັດ.

ລາຍລະອຽດຂອງການດຳເນີນງານທີ່ບໍລິສັດທີ່ມີໃນປັດຈຸບັນ ມີຢູ່ໃນບົດອະທິບາຍເລກທີ 4.

3.15 *ລາຍໄດ້ລໍຖ້າຊຳລະສະສາງ*

ລາຍໄດ້ລໍຖ້າຊຳລະສະສາງແມ່ນໜີ້ສິນໃນສະຖານະການເງິນຂອງບໍລິສັດທີ່ປະກອບດ້ວຍ ລາຍຈ່າຍລ່ວງໜ້າ, ທ້ຽທາງກົງ ຫຼື ທາງອ້ອມໃຫ້ແກ່ບໍລິສັດ, ໂດຍລູກຄ້າຂອງບໍລິສັດ ສຳລັບສິນຄ້າ ຫຼື ການບໍລິການທີ່ຍັງບໍ່ທັນໄດ້ສົ່ງ. ລາຍໄດ້ລໍຖ້າຊຳລະສະສາງແມ່ນຖືກຮັບຮູ້ເປັນລາຍໄດ້ທີ່ຊຳລະສະສາງໃນໃບລາຍງານຜົນການດຳເນີນງານເຊິ່ງແມ່ນສິນຄ້າ ຫຼື ການບໍລິການທີ່ສົ່ງໃຫ້ແກ່ລູກຄ້າ.

3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.16 ກຳໄລຕໍ່ຮຸ້ນ

ລາຍໄດ້ຂັ້ນພື້ນຖານຕໍ່ມູນຄ່າຮຸ້ນແມ່ນຖືກຄິດໄລ່ໂດຍສ່ວນແບ່ງ ກຳໄລ/(ຂາດທຶນ) ສຸດທິ ຫຼັງຈາກອາກອນພາຍໃນປີ ເຊິ່ງຈ່າຍໃຫ້ຜູ້ຖືຮຸ້ນສາມັນຂອງບໍລິສັດ (ຫຼັງຈາກດັດແກ້ເງິນໂບນັດ ແລະ ກອງທຶນສະຫວັດດີການ) ໂດຍຕົວເລກນ້ຳໜັກຖ່ວງສະເລ່ຍຂອງຮຸ້ນທີ່ຍັງຄ້າງພາຍໃນປີ.

ລາຍໄດ້ທີ່ສູນເສຍຕໍ່ປະລິມານຮຸ້ນບໍ່ໄດ້ຖືກຄິດໄລ່ ແລະ ນຳສະເໜີ.

3.17 ທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງປະກອບມີວິສາຫະກິດ ແລະ ບຸກຄົນທີ່ຄວບຄຸມ, ຫຼື ຖືກຄວບຄຸມໂດຍບໍລິສັດ, ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ, ຫຼື ທີ່ຢູ່ພາຍໃຕ້ການຄວບຄຸມໂດຍທົ່ວໄປຂອງບໍລິສັດ.

ພາກສ່ວນທີ່ກ່ຽວຂ້ອງຍັງລວມເອົາບັນດາບໍລິສັດທີ່ກ່ຽວຂ້ອງ ແລະ ບຸກຄົນທີ່ເປັນເຈົ້າຂອງໂດຍທາງກົງ ຫຼື ທາງອ້ອມ ທີ່ມີອຳນາດໃນການລົງຄະແນນສຽງໃນບໍລິສັດ ທີ່ໃຫ້ພວກເຂົາມີອິດທິພົນທີ່ສຳຄັນຕໍ່ບໍລິສັດ, ບຸກຄະລາກອນຜູ້ບໍລິຫານຫຼັກ, ຜູ້ອຳນວຍການ, ແລະ ພະນັກງານທີ່ມີສິດອຳນາດໃນການວາງແຜນ ແລະ ທິດທາງໃນການດຳເນີນງານຂອງບໍລິສັດ.

ບໍລິສັດໃຊ້ດຸນພິນິດໃນການຕີລາຄາ ແລະ ປະເມີນໃນແຕ່ລະມື້ຂອງການລາຍງານ ເຖິງການຈັດປະເພດລາຍການໝຸນວຽນ/ບໍ່ໝຸນວຽນຂອງຊັບສິນ ແລະ ໜີ້ສິນທີ່ກ່ຽງຂ້ອງກັບຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ.

4. ລາຍຮັບ

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ລາຍຮັບຈາກສັນຍາການຮ່ວມມື (*)	867,210,999	2,389,832,351
ລາຍຮັບຈາກການເຊົ່າ	8,222,055,192	7,614,124,338
	9,089,266,191	**10,003,956,689**

(*) ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແພລັທນຳ ຊີເນເພລັກ (ລາວ) ຈຳກັດ (ເມເຈີ), ບໍລິສັດ ໄດ້ໃຫ້ເຊົ່າໃນໄລຍະເວລາ 20 ປີ ນັບແຕ່ ວັນທີ 7 ສິງຫາ 2015 ເຖິງ ວັນທີ 6 ສິງຫາ 2035 ໃນສ່ວນຂອງຊັບສິນເພື່ອການລົງທຶນເຂົ້າໃນການດຳເນີນງານທາງດ້ານໂຮງໜັງຮ່ວມກັນກັບເມເຈີ. ລາຍຮັບຈາກການດຳເນີນງານຂອງໂຮງໜັງ ແມ່ນແບ່ງກັນລະຫວ່າງບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ຕາມການກຳນົດໄວ້ໃນສັນຍາ.

5. ລາຍຈ່າຍການດຳເນີນງານ

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ລາຍຈ່າຍຄ່າຫຼຸ້ຍຫຼ້ຽນ	1,023,915	-
ຄ່າເຊື່ອມມູນຄ່າຂອງໜີ້ເສຍ	171,444,970	-
ລາຍຈ່າຍໃຫ້ພະນັກງານ	375,759,000	385,210,860
ອື່ນໆ	298,012,854	613,082,657
	846,240,739	**998,293,517**

6. ລາຍຮັບທາງການເງິນ

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ສ່ວນຕ່າງກຳໄລ-ຂາດທຶນຈາກອັດຕາແລກປ່ຽນ	1,701,290,218	187,809,544
	1,701,290,218	**187,809,544**

7. ລາຍຈ່າຍທາງການເງິນ

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ລາຍຈ່າຍດອກເບ້ຍຈາກຝ່າຍທີ່ກ່ຽວຂ້ອງ	2,291,851,284	2,279,361,633
	2,291,851,284	**2,279,361,633**

8. ອາກອນ

ປີຜ່ານມາບໍລິສັດຕ້ອງໄດ້ຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນອາກອນໂດຍອີງຕາມກົດໝາຍສ່ວຍສາອາກອນ ເລກທີ70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງຈາກວັນທີ 24 ພຶດສະພາ 2016 ແລະ ສິ້ນສຸດລົງພ້ອມກັບການອອກກົດໝາຍອາກອນລາຍໄດ້ ສະບັບເລກທີ 67/ສພຊ.

ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 70/ສພຊ. ບໍລິສັດໄດ້ອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາປົກກະຕິໃນໄລຍະ 4 ປີທຳອິດນັບແຕ່ປີ 2019 ເຖິງປີ 2022 ຍ້ອນວ່າບໍລິສັດໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019. ສະນັ້ນ, ອັດຕາອາກອນທີ່ບັງຄັບໃຊ້ສຳລັບບໍລິສັດໃນປີ 2019 ແມ່ນ 19%.

ພາຍໃຕ້ກົດໝາຍວ່າດ້ວຍອາກອນລາຍໄດ້ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020 ອັດຕາອາກອນກຳໄລປົກກະຕິ ("PT") ແມ່ນ 20%. ນອກຈາກນີ້, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວໄດ້ຮັບອັດຕາຈູງໃຈທີ່ 13% ເປັນເວລາ 4 ປີນັບຈາກວັນທີ່ຈົດທະບຽນ. ອີງຕາມອັດຕາອາກອນທີ່ບັງຄັບໃຊ້ສຳລັບບໍລິສັດໃນປີ 2020 ແມ່ນ 13%.

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ລາຍຈ່າຍອາກອນກຳໄລປັດຈຸບັນ	118,653,530	727,271,313
ລາຍຈ່າຍອາກອນລໍຖ້າຊຳລະສະສາງ	1,414,934,834	1,621,514,150
	1,533,588,364	**2,348,785,463**

ອາກອນກຳໄລປັດຈຸບັນ ("PT")

ການສົ່ງຄືນອາກອນທີ່ບໍລິສັດຍື່ນຈະຕ້ອງຜ່ານການກວດສອບໂດຍເຈົ້າໜ້າທີ່ອາກອນ. ເນື່ອງຈາກການບັງຄັບໃຊ້ກົດໝາຍ ແລະ ຂໍ້ບັງຄັບດ້ານອາກອນມີຄວາມອ່ອນໄຫວຕໍ່ການຕີຄວາມທີ່ແຕກຕ່າງກັນຈຳນວນເງິນທີ່ລາຍງານໃນເອກະສານລາຍງານການເງິນຈຶ່ງອາດຈະປ່ຽນແປງໄດ້ໃນພາຍຫຼັງເມື່ອເຈົ້າໜ້າທີ່ສ່ວນອາກອນກວດກາຂັ້ນສຸດທ້າຍ.

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ກີບ	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ*
ກຳໄລກ່ອນອາກອນທາງບັນຊີ	**11,034,827,539**	**10,082,667,122**
ອັດຕາອາກອນກຳໄລ	13%	19%
ລາຍຈ່າຍອາກອນກຳໄລ	1,434,527,580	1,915,706,753
ດັດແກ້ໂດຍການເພີ່ມຂຶ້ນ/(ຫຼຸດລົງ) ອາກອນກຳໄລ		
ລາຍຈ່າຍດອກເບ້ຍທີ່ບໍ່ອະນຸຍາດໃຫ້ຫັກເປັນຄ່າໃຊ້ຈ່າຍ	297,940,667	433,078,710
ຄ່າເຊື່ອມມູນຄ່າໜີ້ເສຍ	22,287,846	-
ກຳໄລທີ່ຍັງບໍ່ທັນເກີດຂຶ້ນຈິງຈາກອັດຕາແລກປ່ຽນ	(221,167,728)	-
ຄ່າຫຼຸ້ຍຫ້ຽນຊັບສິນເພື່ອການລົງທຶນພາຍໃຕ້ກົດໝາຍອາກອນ	(1,223,286,644)	(1,522,201,150)
ລາຍຮັບທີ່ຖືກຍົກເວັ້ນອາກອນ ແລະ ການຕີມູນຄ່າຈາກຊັບສິນເພື່ອການລົງທຶນ	(191,648,191)	(99,313,000)
ຄ່າໃຊ້ຈ່າຍພາສີຈາກກຳໄລໝຸນວຽນ	**118,653,530**	**727,271,313**

8. ອາກອນ(ຕໍ່)

ອາກອນລໍຖ້າຊຳລະສະສາງ

ຕະຕາລາງລຸ່ມນີ້ ແມ່ນໜີ້ສິນອາກອນລໍຖ້າຊຳລະສະສາງທີ່ຮັບຮູ້ໂດຍບໍລິສັດ, ແລະ ລາຍການເຄື່ອນໄຫວແມ່ນລະຫວ່າງໄລຍະປັດຈຸບັນ ແລະ ໄລຍະກ່ອນ.

ສະກຸນເງິນ: ກີບ

	ໃນລາຍງານຖານະການເງິນ		*ໃນລາຍງານຜົນການດຳເນີນງານ*	
	31 ທັນວາ 2020	*31 ທັນວາ 2019*	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020*	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019*
ໜີ້ສິນອາກອນລໍຖ້າຊຳລະສະສາງ				
ຄວາມແຕກຕ່າງລະຫວ່າງ ຖານອາກອນ ແລະ ຖານການບັນຊີທີ່ກ່ຽວຂ້ອງກັບຊັບສິນເພື່ອການລົງທຶນ	6,188,878,021	4,773,943,187	1,414,934,834	1,621,514,150
ໜີ້ສິນອາກອນລໍຖ້າຊຳລະສະສາງສຸດທິ	***6,188,878,021***	***4,773,943,187***		
ຄ່າໃຊ້ຈ່າຍອາກອນລໍຖ້າຊຳລະສະສາງສຸດທິໃນໃບລາຍງານຜົນການດຳເນີນງານ			***1,414,934,834***	***1,621,514,150***

9. ເງິນສົດ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ເງິນສົດໃນຄັງ	22,532,369	133,881,789
ເງິນຝາກທະນາຄານ	22,474,988,153	38,521,595,180
	22,497,520,522	**38,655,476,969**

10. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ (*) (ບົດອະທິບາຍເລກທີ *16*)	30,165,838,073	12,226,797,139
ໜີ້ຕ້ອງຮັບຈາກຜູ້ເຊົ່າ	883,891,606	980,438,029
ການເຊົ່າ: ຄ່າເຊື່ອມມູນຄ່າໜີ້ເສຍ	(171,444,970)	-
	30,878,284,709	**13,207,235,168**

(*) ລາຍຮັບຈາກຄ່າເຊົ່າ ແລະ ການດຳເນີນງານອື່ນໆເຊັ່ນ: ລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາຈາກຜູ້ເຊົ່າຈຳນວນໜຶ່ງໃນ ຊ່ວງລະຫວ່າງວັນທີ 30 ພະຈິກ 2017 ຫາ ວັນທີ 31 ທັນວາ 2020 ແມ່ນໄດ້ຮັບເງິນແລ້ວ ແລະ ເກັບໄວ້ໂດຍ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ.

11. ຈ່າຍລ່ວງໜ້າສຳລັບການຊື້ຊັບສິນ

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ຈ່າຍລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍ ເລກທີ 16)*	10,000,000,000	23,400,000,000
	10,000,000,000	**23,400,000,000**

ລາຍລະອຽດຂອງຈ່າຍລ່ວງໜ້າມີດັ່ງນີ້:

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ລ່ວງໜ້າສຳລັບການໄດ້ມາຂອງພື້ນທີ່ສຳນັກງານຄັ້ງທີ 1	-	23,400,000,000
ລ່ວງໜ້າສຳລັບການໄດ້ມາຂອງພື້ນທີ່ສຳນັກງານຄັ້ງທີ 2 (ກ)	10,000,000,000	-
	10,000,000,000	**23,400,000,000**

(ກ) ອີງຕາມຂໍ້ຕົກລົງໃນວັນທີ 21 ມັງກອນ 2020, ບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ຕົກລົງວ່າ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ຈະ ໂອນໃຫ້ບໍລິສັດເພີ່ມ 1,380.3 ຕາຕະລາງແມັດໃນຊັ້ນ 3 ຂອງວຽງຈັນເຊັ້ນເຕີ (ຕຶກຟຼາຊ່າ) ດ້ວຍມູນຄ່າສັນຍາ 2,070,450 ໂດລາສະຫະລັດ. ນະວັນທີ 31 ທັນວາ 2020, ບໍລິສັດໄດ້ຈ່າຍເງິນ 10,000,000,000 ໃຫ້ກັບບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດເປັນເງິນລ່ວງໜ້າຂອງສັນຍາແລ້ວ.

12. ຊັບສິນເພື່ອການລົງທຶນ

ໃນວັນທີ 30 ພະຈິກ 2017, ບໍລິສັດແມ່ - ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດໄດ້ໂອນຊັບສິນໃຫ້ເຊົ່າ ("ຊັບສິນເພື່ອການລົງທຶນ - ອົງປະກອບທີ່ 1") ເຊິ່ງປະກອບດ້ວຍໜ່ວຍຄ້າຍ່ອຍ ແລະ ຫ້ອງການ ດ້ວຍພື້ນທີ່ລວມ 9,607.88 ຕາຕະລາງແມັດ.

ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຮັບໂອນພື້ນທີ່ 1,709.5 ຕາຕະລາງແມັດ ໃນຊັ້ນ 2, 4, 5 ແລະ 8 ("ຊັບສິນເພື່ອການລົງທຶນ - ອົງປະກອບທີ່ 2") ຂອງວຽງຈັນເຊັ້ນເຕີ (ຕຶກພູຊ່າ).

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020

	ຊັບສິນເພື່ອການລົງທຶນ - ອົງປະກອບທີ 1	*ຊັບສິນເພື່ອການລົງທຶນ - ອົງປະກອບທີ 2*	*ລວມ*
	ກີບ	*ກີບ*	*ກີບ*
ນະວັນທີ 1 ມັງກອນ	**165,197,500,000**	**-**	**165,197,500,000**
ເພີ່ມຂຶ້ນພາຍໃນປີ	-	27,453,444,309	27,453,444,309
ດັດແກ້ມູນຄ່າຍຸຕິທຳ	(1,191,535,399)	2,665,752,250	1,474,216,851
ນະວັນທີ 31 ທັນວາ	**164,005,964,601**	**30,119,196,559**	**194,125,161,160**

ສຳລັບປີສິ້ນສຸດວັນທີ 31 ທັນວາ 2019

	ຊັບສິນເພື່ອການລົງທຶນ - ອົງປະກອບທີ 1	*ຊັບສິນເພື່ອການລົງທຶນ - ອົງປະກອບທີ 2*	*ລວມ*
	ກີບ	*ກີບ*	*ກີບ*
ນະວັນທີ 1 ມັງກອນ	**164,674,800,000**	**-**	**164,674,800,000**
ເພີ່ມຂຶ້ນພາຍໃນປີ	-	-	-
ດັດແກ້ມູນຄ່າຍຸຕິທຳ	522,700,000	-	522,700,000
ນະວັນທີ 31 ທັນວາ	**165,197,500,000**	**-**	**165,197,500,000**

12. ຊັບສິນເພື່ອການລົງທຶນ (ຕໍ່)

12.1 *ຕົ້ນທຶນຂອງຊັບສິນເພື່ອການລົງທຶນ*

ຕົ້ນທຶນຊັບສິນເພື່ອການລົງທຶນ - ອົງປະກອບທີ 1

ຂໍ້ມູນລາຍລະອຽດຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ມີດັ່ງນີ້:

- ພາກ A: ໜ່ວຍຄ້າຍ່ອຍ ແລະ ຫ້ອງການ ໃນຊັ້ນທີ 1, 2, 4 ແລະ 6 ຂອງວຽງຈັນເຊັ້ນເຕີ (ຕຶກພລາຊາ) ໂດຍມີເນື້ອທີ່ 5,753.66 ຕາແມັດ (ຫົວໜ່ວຍ ເລກທີ A1003, A2003, A1012, A1017-2, A1018, A1021, A1020, A1023, A1038, A2049, A4003-1, A4009, B4001, C1016, F6020 ແລະ F6027);

- ພາກ B: ຫ້ອງການ ແລະ ບ່ອນໂຄສະນາສິນຄ້າ ໃນຊັ້ນທີ 1, 6, 7 ແລະ 9 ຂອງວຽງຈັນເຊັ້ນເຕີ (ຕຶກຫ້ອງການ) ໂດຍມີເນື້ອທີ 3,854.22 ຕາແມັດ (ຫົວໜ່ວຍ ເລກທີ A1007-1, F6001 ຫາ 8, F6009-1, F6009-2, F6010 ຫາ F6015, F6016-1, F6016-2, F6017, F6018, F6019, F6021 ຫາ F6026, F6028 ຫາ F6031, F6032-1, F6032-2, F6033 ຫາ F6049, F7004 ຫາ F7010, F9001 ຫາ F9012 ແລະ A1000).

ຊັບສິນເພື່ອການລົງທຶນນີ້ ແມ່ນຕັ້ງຢູ່ ຖະໜົນ ຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ໄລຍະເວລາການໃຫ້ເຊົ່າທັງໝົດແມ່ນ 50 ປີ ແລະ ສາມາດຕໍ່ສັນຍາສຳປະທານໄດ້ຕື່ມອີກ 20 ປີ, ແຕ່ ວັນທີ 29 ກັນຍາ 2010 ອີງຕາມໃບຢັ້ງຢືນການສຳປະທານທີ່ດິນ ລົງວັນທີ 29 ເມສາ 2014 ແລະ ໃບສັນຍາສຳປະທານຕື່ມ ລົງວັນທີ 29 ເມສາ 2014 ແລະ ໃບທະບຽນລົງວັນທີ 8 ພຶດສະພາ 2014 ເຊິ່ງອອກໂດຍ ເຈົ້າໜ້າທີ່ນະຄອນຫຼວງວຽງຈັນ ມອບໃຫ້ແກ່ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ບໍລິສັດ ພັດທະນາສຸນເສດຖະກິດການຄ້າ ຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໄດ້ຮັບໃບຕາດິນ ເມື່ອວັນທີ 4 ເມສາ 2014 ຈາກກົມສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ນະຄອນຫຼວງວຽງຈັນ.

ໃນເບື້ອງຕົ້ນ ບໍລິສັດ ໄດ້ຮັບຮູ້ຊັບສິນຕາມຕົ້ນທຶນ, ຕາມລາຄາທີ່ຕົກລົງກັນ ລະຫວ່າງ ບໍລິສັດ ແລະ ບໍລິສັດ ພັດທະນາສຸນ ເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ລາຄາດັ່ງກ່າວໄດ້ຖືກກຳນົດໂດຍອີງໃສ່ບົດລາຍງານການປະເມີນ ມູນຄ່າ ໃນວັນທີ 26 ມິນາ 2018 ໂດຍ ບໍລິສັດ Sims Property Consultants Company Limited, ທີ່ປຶກສາພາຍ ນອກຈາກປະເທດໄທ, ເຊິ່ງມູນຄ່າຊັບສິນເພື່ອການລົງທຶນທັງໝົດແມ່ນ:

- ພາກ A: 95,999,200,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ;
- ພາກ B: 64,232,500,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ.

ຕົ້ນທຶນຊັບສິນເພື່ອການລົງທຶນ - ອົງປະກອບທີ 2

ລາຄາຊື້ຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ແມ່ນ 30,198,788,739 ກີບ (ລວມອາກອນມູນຄ່າເພີ່ມ 10%). ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ເຊິ່ງປະກອບດ້ວຍ 14 ໜ່ວຍຕັ້ງຢູ່ໃນ ຊັ້ນ 2, 4, 5 ແລະ ຊັ້ນ 8 ຂອງອາຄານດຽວ ກັນຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1.

12. ຊັບສິນເພື່ອການລົງທຶນ (ຕໍ່)

12.2 *ການວັດແທກມູນຄ່ຍຸຕິທຳ – ຊັບສິນເພື່ອການລົງທຶນ*

ນະໂຍບາຍ ແລະ ຂັ້ນຕອນການປະເມີນມູນຄ່າຂອງບໍລິສັດສຳລັບການຕີມູນຄ່າຊັບສິນ ແມ່ນໄດ້ຖືກສະເໜີໂດຍຄະນະຜູ້ບໍລິຫານ ໃນຂະນະທີ່ ຄະນະກຳມະການກວດສອບເປັນຜູ້ກຳນົດໃນແຕ່ລະປີ. ຄະນະຜູ້ບໍລິຫານຈະແນະນຳ ແລະ ຄະນະກຳມະການກວດສອບແຕ່ງຕັ້ງຜູ້ປະເມີນພາຍໃນ/ພາຍນອກເຊິ່ງມີໜ້າທີ່ຮັບຜິດຊອບໃນການປະເມີນມູນຄ່າຊັບສິນຂອງບໍລິສັດ ເພື່ອຈຸດປະສົງໃນການກຳນົດມູນຄ່າຍຸຕິທຳໃນເອກະສານລາຍງານການເງິນປະຈຳປີ. ເງື່ອນໄຂໃນການຄັດເລືອກລວມມີຄວາມຮູ້ກ່ຽວກັບຕະຫຼາດ, ຊື່ສຽງ, ຄວາມເປັນເອກະລາດ ແລະ ບໍ່ວ່າຈະເປັນມາດຕະຖານດ້ານວິຊາຊີບ. ຜູ້ປະເມີນຜົນແມ່ນຈະມີການປ່ຽນທຸກໆສາມປີ.

ການປ່ຽນແປງເຕັກນິກຂອງການປະເມີນມູນຄ່າ

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອີງປະກອບທີ 1 ກ່ອນໜ້ານີ້ໄດ້ຖືກກຳນົດໂດຍວິທີສ່ວນຫຼຸດກະແສເງິນສົດ (DCF). ບໍລິສັດເຊື່ອວ່າວິທີການຄິດໄລ່ມູນຄ່າລາຍໄດ້ໃຫ້ຄວາມໂປ່ງໃສດີກວ່າວິທີສ່ວນຫຼຸດກະແສເງິນສົດ (DCF) ແລະ ໄດ້ຕັດສິນໃຈທີ່ຈະປ່ຽນແປງວິທີການປະເມີນມູນຄ່າ. ການປ່ຽນແປງວິທີການປະເມີນມູນຄ່ານີ້ຈະນຳໄປໃຊ້ໃນອານະຄົດເນື່ອງຈາກເປັນການປ່ຽນແປງໃນການຄາດຄະເນ.

ສຳລັບປີສິ້ນສຸດວັນທີ 31 ທັນວາ 2019

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອີງປະກອບທີ 1 ແມ່ນການຄິດໄລ່ໂດຍວິທີສ່ວນຫຼຸດກະແສເງິນສົດ (DCF)

ພາຍໃຕ້ວິທີການ ສ່ວນຫຼຸດກະແສເງິນສົດ, ມູນຄ່າຍຸຕິທຳໄດ້ຖືກຄາດຄະເນໂດຍການຕັ້ງສົມມຸດຖານ ກ່ຽວກັບ ຜົນປະໂຫຍດ ແລະ ໜີ້ສິນຂອງຜູ້ເປັນເຈົ້າຂອງຕະຫຼອດອາຍຸຂອງການໃຊ້ງານຂອງຊັບສິນ ລວມທັງມູນຄ່າທີ່ມີຢູ່ ຫຼື ມູນຄ່າຢຸດເຊົານຳໃຊ້. ວິທີການນີ້ປະກອບດ້ວຍການຄາດຄະເນຂອງກະແສເງິນສົດຕາມຜົນປະໂຫຍດທີ່ແທ້ຈິງຂອງຊັບສິນ. ສຳລັບກະແສເງິນສົດທີ່ຄາດຄະເນຕາມຄວາມເໝາະສົມ, ອັດຕາສ່ວນຫຼຸດຈາກຕະຫຼາດ ແມ່ນຖືກນຳໃຊ້ເພື່ອສ້າງມູນຄ່າປັດຈຸບັນຂອງກະແສລາຍຮັບທີ່ກ່ຽວຂ້ອງກັບຊັບສິນ. ຕາມປົກກະຕິ ຜົນໄດ້ຮັບທີ່ອອກມາຈະຖືກກຳນົດໄວ້ຕ່າງຫາກ ແລະ ແຕກຕ່າງຈາກອັດຕາສ່ວນຫຼຸດ.

ໄລຍະເວລາຂອງກະແສເງິນສົດ ແລະ ໄລຍະເວລາສະເພາະຂອງການໄຫຼເຂົ້າ ແລະ ໄຫຼອອກ ແມ່ນໄດ້ຖືກກຳນົດໂດຍເຫດການເຊັ່ນວ່າ ການທົບທວນຄ່າເຊົ່າ, ການຕໍ່ອາຍຸການເຊົ່າ ແລະ ການໃຫ້ເຊົ່າໃໝ່, ການປັບປຸງໃໝ່, ຫຼື ການຕົບແຕ່ງໃໝ່ທີ່ກ່ຽວຂ້ອງ. ໄລຍະເວລາທີ່ເໝາະສົມແມ່ນເຄື່ອນໄຫວຕາມປົກກະຕິຂຶ້ນກັບພຶດຕິກຳຂອງຕະຫຼາດ ຕາມລັກສະນະປະເພດຂອງຊັບສິນຕົວຈິງ. ກະແສເງິນສົດໃນແຕ່ໄລຍະ ໂດຍທົ່ວໄປແມ່ນໄດ້ຄາດຄະເນຕາມລາຍຮັບທັງໝົດ ຫັກສ່ວນຫ້ອງທີ່ວ່າງ, ລາຍຈ່າຍທີ່ບໍ່ສາມາດຮຽກເກັບຄືນໄດ້, ການເກັບຄືນບໍ່ໄດ້, ແຮງຈູງໃຈໃນການເຊົ່າ, ລາຍຈ່າຍໃນການບຳລຸງຮັກສາ, ຄ່າຕົວແທນ ແລະ ຄ່ານາຍໜ້າ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ການບໍລິຫານອື່ນໆ. ລາຍຮັບສຸດທິຈາກການດຳເນີນງານແຕ່ລະໄລຍະ ຂຶ້ນກັບການຄາດຄະເນຂອງມູນຄ່າທີ່ຈະສິ້ນສຸດທີ່ຄາດໄວ້ ໃນເວລາສິ້ນສຸດໄລຍະເວລາທີ່ກຳນົດໄວ້, ແມ່ນຈະຖືກຫຼຸດລົງ.

12. ຊັບສິນເພື່ອການລົງທຶນ (ຕໍ່)

12.2 *ການວັດແທກມູນຄ່ຍຸຕິທຳ – ຊັບສິນເພື່ອການລົງທຶນ (ຕໍ່)*

ສຳລັບປີສິ້ນສຸດວັນທີ 31 ທັນວາ 2020

ທັງສອງລວມທັງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ-ອົງປະກອບທີ 2 ແມ່ນປະເມີນມູນຄ່າໂດຍໃຊ້ວິທີການກຳນົດມູນຄ່າຕາມລາຍໄດ້, ໂດຍມູນຄ່ายุຕິທຳຂອງຊັບສິນຈະຄາດຄະເນໂດຍອີງຕາມການດຳເນີນງານສຸດທິປົກກະຕິທີ່ເກີດຂຶ້ນຈາກຊັບສິນ, ເຊິ່ງຫານດ້ວຍອັດຕາການໃຊ້ທຶນ (ສ່ວນຫຼຸດ). ມູນຄ່ายุຕິທຳຖືກຳນົດໂດຍອີງໃສ່ບົດລາຍງານການຕີມູນຄ່າ ລົງວັນທີ 25 ມັງກອນ 2021, ອອກໂດຍບໍລິສັດ ລາວ ສາກົນ ປະເມີນມູນຄ່າຊັບສິນ ຈຳກັດ. ໂດຍການປະເມີນຄ່າເຊົ່າຈາກກິດຈະກຳການເຊົ່າທີ່ມີຄຸນສົມບັດແຂ່ງຂັນສຳລັບພື້ນທີ່ວ່າງ. ການຫັກລົບຫຼັງຈາກນັ້ນແມ່ນເຮັດເພື່ອການຫວ່າງ ແລະ ການສູນເສຍການເກັບກຳ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ. ລາຍໄດ້ສຸດທິຈາກການດຳເນີນງານທີ່ໄດ້ຮັບແບ່ງອອກໂດຍອັດຕາການລົງທຶນໂດຍລວມເພື່ອຮັບເອົາຄວາມຄິດເຫັນຂອງມູນຄ່າສຳລັບຊັບສິນດັ່ງກ່າວ. ອັດຕາການລົງທຶນສະແດງເຖິງຄວາມສຳພັນລະຫວ່າງລາຍໄດ້ສຸດທິຈາກການດຳເນີນງານ ແລະ ມູນຄ່າ.

12.3 *ລະດັບຂັ້ນຂອງມູນຄ່ายุຕິທຳ*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນການວິເຄາະມູນຄ່ายุຕິທຳຂອງຊັບສິນເພື່ອການລົງທຶນ ໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໂດຍລະດັບຂັ້ນຂອງມູນຄ່ายุຕິທຳ:

	ມູນຄ່ายุຕິທຳ				
	ລາຄາອ້າງອີງໃນຕະຫຼາດທີ່ມີຢູ່ (ລະດັບ 1)	*ຕົວປ້ອນສຳຄັນທີ່ບໍ່ສາມາດສັງເກດເຫັນໄດ້ (ລະດັບ 2)*	*ຕົວປ້ອນສຳຄັນຕ່າງໆທີ່ບໍ່ສາມາດສັງເກດເຫັນໄດ້ (ລະດັບ 3)*	*ລວມທັງໝົດ*	*ກຳໄລທັງໝົດພາຍໃນປີໃນໃບລາຍງານຜົນການດຳເນີນງານ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*
ວັນທີ 31 ທັນວາ 2020					
ຊັບສິນເພື່ອການລົງທຶນ	-	-	194,125,161,160	194,125,161,160	1,474,216,851
	-	**-**	**194,125,161,160**	**194,125,161,160**	**1,474,216,851**
ວັນທີ 31 ທັນວາ 2019					
ຊັບສິນເພື່ອການລົງທຶນ	-	-	165,197,500,000	165,197,500,000	522,700,000
	-	**-**	**165,197,500,000**	**165,197,500,000**	**522,700,000**

ບໍ່ມີການໂອນລະຫວ່າງລະດັບ 1, 2 ຫຼື 3 ໃນລະຫວ່າງປີສິ້ນສຸດ ວັນທີ 31 ທັນວາ 2020

12. ຊັບສິນເພື່ອການລົງທຶນ (ຕໍ່)

12.4 *ເຕັກນິກການປະເມີນມູນຄ່າທີ່ໃຊ້ໃນການຫາມູນຄ່າຍຸຕິທຳ*

ຕາຕະລາງຕໍ່ໄປນີ້ສະແດງເຖິງເຕັກນິກການປະເມີນມູນຄ່າທີ່ໃຊ້ໃນການວັດແທກທຸນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ-ອົງປະກອບທີ 2, ເຊັ່ນດຽວກັບການນຳເຂົ້າທີ່ບໍ່ສາມາດສັງເກດເຫັນໄດ້ຢ່າງສຳຄັນ:

ເຕັກນິກການປະເມີນຄ່າ	*ການນຳເຂົ້າທີ່ບໍ່ສາມາດສັງເກດເຫັນໄດ້ຢ່າງສຳຄັນ*	*ຄວາມສຳພັນລະຫວ່າງປັດໄຈນຳເຂົ້າທີ່ບໍ່ສາມາສັງເກດໄດ້ທີ່ສຳຄັນ ແລະ ການວັດມູນຄ່າຍຸຕິທຳ*
ວິທີການຄິດໄລ່ລາຍໄດ້ເປັນທຶນ	▶ ມູນຄ່າເຊົ່າໂດຍຄາດຄະເນ ທີ່ (ERV) 1,391,513 ໂດລາ ສະຫະລັດ ▶ ຄ່າໃຊ້ຈ່າຍໃນການດຳເນີນງານທີ່ 5% ▶ ອັດຕາວ່າງໄລຍະຍາວທີ່ 13.07% ▶ ອັດຕາສ່ວນຫຼຸດທີ່ 5.45%	*ມູນຄ່າຍຸຕິທຳໂດຍປະມານຈະເພີ່ມຂຶ້ນ/(ຫຼຸດລົງ) ຫາກ:* ▶ ມູນຄ່າເຊົ່າໂດຍຄາດຄະເນ ສູງກວ່າ/(ຕ່ຳກວ່າ) ▶ ຄ່າໃຊ້ຈ່າຍໃນການດຳເນີນງານ ຕ່ຳກວ່າ/(ສູງກວ່າ) ▶ ອັດຕາວ່າງໄລຍະຍາວ ຕ່ຳກວ່າ/(ສູງກວ່າ) ▶ ອັດຕາສ່ວນຫຼຸດ ຕ່ຳກວ່າ/(ສູງກວ່າ)

13. ໜີ້ຕ້ອງສົ່ງ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະສັ້ນ

	31 ທັນວາ 2020 *ກີບ*	*31 ທັນວາ 2019* *ກີບ*
ໜີ້ຕ້ອງສົ່ງອາກອນກຳໄລ	329,245,928	607,271,314
ລາຍຮັບລ່ວງໜ້າຈາກຜູ້ເຊົ່າ	3,198,832,995	548,578,974
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	58,795,420	2,135,433,326
ເງິນຝາກຈາກຜູ້ເຊົ່າ	1,581,822,504	184,431,206
ອື່ນໆ	180,740,009	453,917,616
	5,349,436,856	**3,929,632,436**

ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະຍາວ

	31 ທັນວາ 2020 *ກີບ*	*31 ທັນວາ 2019* *ກີບ*
ລາຍຮັບລ່ວງໜ້າຈາກຜູ້ເຊົ່າ - ໄລຍະຍາວ	6,643,543,597	-
	6,643,543,597	**-**

14. ການກູ້ຢືມໄລຍະຍາວ

	31 ທັນວາ 2020 *ກີບ*	*31 ທັນວາ 2019* *ກີບ*
ການກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍຊ້ອນທ້າຍເລກທີ 16)*	64,232,500,000	64,232,500,000
	64,232,500,000	**64,232,500,000**

ອີງຕາມບົດບັນທຶກຂອງການໂອນຊັບສິນໃນວັນທີ 30 ພະຈິກ 2017 ແລະ ຂໍ້ຕົກລົງເງິນກູ້ ໃນວັນທີ 30 ພະຈິກ 2017, ບໍລິສັດຮັບຮູ້ເງິນກູ້ຢືມໄລຍະສັ້ນຈາກ NNCD ໂດຍຕົ້ນທຶນເປັນສ່ວນຕ່າງລະຫວ່າງລາຄາຕົ້ນທຶນຂອງຊັບສິນເພື່ອການລົງທຶນ ນະເວລາທີ່ໂອນ 160,231,700,000 ກີບ *(ບົດອະທິບາຍເລກທີ 12)* ແລະ ທຶນສະໜັບສະໜຸນຈາກ NNCD ຈຳນວນ 95,999,200,000 ກີບ. ບໍລິສັດໃຊ້ 68 ໜ່ວຍໃນ ພາກ B ຂອງຊັບສິນເພື່ອການລົງທຶນເປັນຫຼັກຄ้ำປะกัน.

ອີງຕາມການປັບປຸງຂໍ້ຕົກລົງການກູ້ຢືມໃນວັນທີ 13 ມິຖຸນາ 2018, ການກູ້ຢືມມີໄລຍະ 2 ປີ ແລະ ກຳນົດອັດຕາດອກເບ້ຍ 3.5% ຕໍ່ປີ. ດັ່ງນັ້ນ, ມື້ຄົບກຳນົດແມ່ນວັນທີ 30 ພະຈິກ 2019 ແລະ ຕົ້ນທຶນ ແລະ ດອກເບ້ຍຈະຊຳລະໃນມື້ຄົບກຳນົດ.

ທັງສອງຝ່າຍເຫັນດີວ່າມີພຽງຜູ້ໃຫ້ຢືມມີສິດໃຫ້ເລືອກວິທີການຊຳລະ. ເງື່ອນໄຂ ແລະ ວິທີການຊຳລະເງິນແມ່ນເປັນໄປຕາມຂໍ້ກຳນົດຂອງຂໍ້ຕົກລົງ:

- ໃນກໍລະນີວ່າຜູ້ໃຫ້ຢືມເລືອກຈ່າຍຜ່ານເງິນສົດ, ຈຳນວນຂອງການຈ່າຍແມ່ນເທົ່າກັບຈຳນວນຂອງຕົ້ນທຶນ ແລະ ດອກເບ້ຍ ຕາມຂໍ້ກຳນົດໃນຂໍ້ 2.2 ຂອງຂໍ້ຕົກລົງ (ຈາກວັນທີ່ຂອງສັນຍາມີຜົນບັງຄັບໃຊ້ຈົນເຖິງມື້ຄົບກຳນົດ)
- ໃນກໍລະນີວ່າຜູ້ໃຫ້ຢືມເລືອກດ້ວຍວິທີການອອກຮຸ້ນໃໝ່ໂດຍບໍລິສັດ, ຈຳນວນຮຸ້ນທີ່ຕ້ອງໄດ້ຊຳລະໃນແກ່ຜູ້ກູ້ຈະຄ้ำ ນອນ ຈາກສ່ວນຕ່ຳລະຫວ່າງ (A) ມູນຄ່າໜ້າບັດຂອງຮຸ້ນຂອງຜູ້ຢືມ, (B) ຊັບສິນສຸດທິຕໍ່ຮຸ້ນຂອງຜູ້ຢືມ, (C) 90% ຂອງລາຄາ ຮຸ້ນສະເລ່ຍທີ່ຊື້ຂາຍໃນຕະຫຼາດຫຼັກຊັບລາວພາຍໃນ 30 ວັນກ່ອນຈ່າຍເງິນປັນຜົນ. ນອກຈາກນີ້, ຫາກຜູ້ໃຫ້ຢືມເລືອກທີ່ ຈະຮັບຮຸ້ນໃໝ່ທີ່ອອກໂດຍບໍລິສັດ, ຜູ້ໃຫ້ກູ້ຍືນດີທີ່ຈະຜ່ອນດອກເບ້ຍ.

ວັນທີ 4 ມີນາ 2019, NNCD ອອກໜັງສືສະບັບເລກທີ 44/NNCD ເພື່ອຫຼຸດດອກເບ້ຍລົງ 700,000,000 ກີບ ຈາກ ຄ่าใช้จ่ายดอกเบี้ยที่เกิดขึ้นสำหรับปีที่สิ้นสุด ນะวันที่ 31 ทันวา 2018.

ໃນວັນທີ 30 ພະຈິກ 2019, NNCD ແລະ ບໍລິສັດໄດ້ເຂົ້າຮ่วมการปรับปรุงสัญญาเงินกู้สะบับแก้ไขโดยกำหนดชำละคืนใหม่ในวันที่ 29 พะจิก 2021 ແລະ ຫຼັກຊັບຄ้ำประกันใหม่เป็น 51 หน่วย ของชัพสินเพื่อการลงทุน - อิงประกอบที่ 1. ອີງຕາມສັນຍາເງິນກູ້ທີ່ປັບປຸງໃໝ່, ເງິນກູ້ຢືມສາມາດຕໍ່ໄດ້ຫຼັງຈາກວັນຄົບກຳນົດໂດຍອີງໃສ່ຕາມຂໍ້ຕົກລົງຂອງບໍລິສັດ ແລະ NNCD.

ນະວັນທີ 31 ທັນວາ 2020, ການບໍລິຫານຂອງບໍລິສັດແມ່ນທັດສະນະທີ່ພວກເຂົາມີຄວາມຄາດຫວັງ ແລະ ມີຄວາມຕັດສິນ ໃຈເພື່ອໝຸນໃຊ້ຝັນທະຕາມຄວາມຈຳເປັນ ແລະ ຈາກນັ້ນ ຈັດປະເພດຝັນທະດັ່ງກ່າວເປັນໜີ້ສິນທີ່ບໍ່ແມ່ນປັດຈຸບັນ.

15. ທຶນຈົດທະບຽນທີ່ຖອກແລ້ວ

	31 ທັນວາ 2020		*31 ທັນວາ 2019*	
	ຈຳນວນຮຸ້ນ	*ກີບ*	*ຈຳນວນຮຸ້ນ*	*ກີບ*
ການອອກຮຸ້ນ ແລະ ຈຳໜ່າຍ				
ຮຸ້ນ				
ຮຸ້ນສາມັນ	147,199,900	147,199,900,000	147,199,900	147,199,900,000

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບທະບຽນວິສາຫະກິດ ເລກທີ 0833/ກຄກ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ຫຼັງຈາກການສະເໜີຂາຍຮຸ້ນຄັ້ງທຳອິດຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL")ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

16. ທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີບັນດາທຸລະກຳບັນຊີກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີ:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ປະເທດທີ່ດຳເນີນທຸລະກິດ*
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ຜູ້ຖືຫຸ້ນ	ສປປ ລາວ

ບັນດາທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນລາຄາທີ່ຕົກລົງກັນຕາມສັນຍາ. ບັນດາທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ລັກສະນະຂອງທຸລະກຳ*	*ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2020*	*ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2018*
		ກີບ	*ກີບ*
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ການເກັບຄ່າເຊົ່າໃນນາມຂອງບໍລິສັດ	15,440,911,298	5,306,051,576
	ຄ່າໃຊ້ຈ່າຍດອກເບ້ຍ	(2,291,851,284)	(2,279,361,633)
	ການຊຳລະໃນນາມບໍລິສັດ	(394,860,869)	(364,076,000)
	ການເກັບຄ່າບຳລຸງຮັກສາໃນນາມຂອງ NNCD	(589,934,415)	(417,417,199)
	ຈ່າຍລ່ວງໜ້າສຳລັບການສັ່ງຊື້ຊັບສິນ	10,000,000,000	23,400,000,000
	ການໂອນຂອງການຊື້ຊັບສິນເພື່ອການລົງທຶນ	(27,453,444,309)	-

16. ທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂໍ້ກຳນົດ ແລະ ເງື່ອນໄຂ

ຍອດເຫຼືອທີ່ຍັງຄ້າງຢູ່ ນະວັນທີ 31 ທັນວາ 2020 ແມ່ນບໍ່ມີຫຼັກຊັບຄ້ຳປະກັນ ແລະ ຈະຖືກຊຳລະເປັນເງິນສົດ. ສຳລັບປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2020, ບໍລິສັດບໍ່ໄດ້ຫັກເງິນແຮສຳລັບໜີ້ເສຍທີ່ກ່ຽວຂ້ອງກັບຈຳນວນເງິນຂອງພາກສ່ວນທີ່ກ່ຽວຂ້ອງ (31 ທັນວາ 2019: ສູນ)

ການຊື້ ແລະ ຜົນປະໂຫຍດຈາກພາກສ່ວນທີ່ກ່ຽວຂ້ອງແມ່ນເຮັດບົນພື້ນຖານການເຈລະຈາສັນຍາ.

ຍອດເຫຼືອໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2020 ແລະ 31 ທັນວາ 2019 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ລັກສະນະຂອງທຸລະກຳ*	*31 ທັນວາ 2020*	*31 ທັນວາ 2019*
			ກີບ	*ກີບ*
***ໜີ້ຕ້ອງຮັບອື່ນໆ** (ບົດອະທິບາຍເລກທີ 10)*				
ບໍລິສັດ ພັດທະນາສູນ ເສດຖະກິດການຄ້າ ຄົບວົງຈອນໜອງຈັນ ຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ໜີ້ຕ້ອງຮັບສຸດທິ	30,165,838,073	12,226,797,139
			30,165,838,073	**12,226,797,139**
***ຈ່າຍລ່ວງໜ້າສຳລັບການສັ່ງຊື້ຊັບສິນ** (ບົດອະທິບາຍເລກທີ 11)*				
ບໍລິສັດ ພັດທະນາສູນ ເສດຖະກິດການຄ້າ ຄົບວົງຈອນໜອງຈັນ ຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ຈ່າຍລ່ວງໜ້າ	10,000,000,000	23,400,000,000
			10,000,000,000	**23,400,000,000**
***ການກູ້ຢືມໄລຍະຍາວ** (ບົດອະທິບາຍເລກທີ 14)*				
ບໍລິສັດ ພັດທະນາສູນ ເສດຖະກິດການຄ້າ ຄົບວົງຈອນໜອງຈັນ ຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ການກູ້ຢືມ (*)	64,232,500,000	64,232,500,000
			64,232,500,000	**64,232,500,000**

(*) ເງິນກູ້ມີເງື່ອນໄຂສຳລັບ 2 ປີ ແລະ ອັດຕາດອກເບ້ຍແມ່ນ 3.5% ຕໍ່ປີ. ຕົ້ນທຶນ ແລະ ອັດຕາດອກເບ້ຍຈະຈ່າຍຄືນໃນວັນຄົບກຳນົດ. ອີງຕາມບົດອະທິບາຍເລກທີ 14 ສຳລັບຂໍ້ມູນເພີ່ມເຕີມ.

ນອກຈາກເງິນກູ້ຢືມໄລຍະຍາວຈາກ NNDC, ຍອດເຫຼືອທີ່ຍັງຄ້າງທັງໝົດກັບພາກສ່ວນທີ່ກ່ຽວຂ້ອງແມ່ນບໍ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ມີດອກເບ້ຍ.

17. ການບໍລິຫານທຶນ

ທຶນຂອງບໍລິສັດປະກອບດ້ວຍທຶນ, ເງິນກູ້, ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ.

ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງບໍລິສັດແມ່ນເພື່ອຮັບປະກັນວ່າ ບໍລິສັດຮັກສາອັດຕາສ່ວນທຶນ ຢູ່ໃນສະພາບທີ່ດີ ເພື່ອສະໜັບສະໜຸນທຸລະກິດຂອງຕົນ ແລະ ເພີ່ມມູນຄ່າຂອງຜູ້ຖືຮຸ້ນ.

ບໍລິສັດບໍລິຫານໂຄງສ້າງທຶນຂອງຕົນ ແລະ ປັບປຸງແກ້ໄຂຕໍ່ໂຄງສ້າງດັ່ງກ່າວ ໃນດ້ານຂອງການປ່ຽນແປງເງື່ອນໄຂເສດຖະກິດ. ເພື່ອຮັກສາ ຫຼື ປັບໂຄງສ້າງທຶນ, ບໍລິສັດອາດຈະປັບປຸງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ, ຄືນທຶນກັບຜູ້ຖືຮຸ້ນ ຫຼື ເພີ່ມຮຸ້ນທຶນ.

ບໍລິສັດໄດ້ຕິດຕາມທຶນ ໂດຍນຳໃຊ້ອັດຕາສ່ວນໜີ້ສິນຕໍ່ທຶນ ເຊິ່ງເທົ່າກັບໜີ້ສິນສຸດທິຫານໃຫ້ທຶນທັງໝົດ ບວກກັບ ໜີ້ສິນສຸດທິ.

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ໜີ້ສິນທັງໝົດ	82,414,358,474	72,936,075,623
ຫັກ: ເງິນສົດ	(22,497,520,522)	(38,655,476,969)
ໜີ້ສິນສຸດທິ	**59,916,837,952**	**34,280,598,654**
ທຶນ	175,091,169,002	167,524,136,514
ທຶນ ແລະ ໜີ້ສິນສຸດທິ	**235,008,006,954**	**201,804,735,168**
ອັດຕາສ່ວນໜີ້ສິນຕໍ່ທຶນ	25%	17%

ຄວາມເໝາະສົມຂອງອັດຕາສ່ວນໜີ້ສິນຕໍ່ທຶນແມ່ນໄດ້ທົບທວນຄືນ ແລະ ກຳນົດໂດຍຄະນະບໍລິຫານໃນແຕ່ລະປີ.

18. ຂໍ້ຜູກພັນສັນຍາ

ບໍລິສັດໄດ້ໃຫ້ພື້ນທີ່ ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳໃນອະນາຄົດ ນະວັນທີ 31 ທັນວາ 2020 ແລະ 31 ທັນວາ 2019 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	31 ທັນວາ 2020	*31 ທັນວາ 2019*
	ກີບ	*ກີບ*
ໜ້ອຍກວ່າ 1 ປີ	5,151,527,659	5,637,693,872
ແຕ່ 1 - 5 ປີ	8,952,749,086	11,927,326,954
ຫຼາຍກວ່າ 5 ປີ	20,016,612	236,548,522
ລວມທັງໝົດ	**14,124,293,357**	**17,801,569,348**

18. ຂໍ້ຜູກພັນສັນຍາ (ຕໍ່)

ຂໍ້ຂໍ້ຜູກພັນສັນຍາພາຍໃຕ້ BCC

ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແຜລັທິນ ຊິໂນເພລັກ (ລາວ) ຈຳກັດ (ເມເຈີ), ບໍລິສັດໄດ້ນຳໃຊ້ຊັບສິນເພື່ອການລົງທຶນຂອງຕົນໂດຍການໃຫ້ເຊົ່າເປັນໄລຍະເວລາ 20 ປີ ເລີ່ມຕັ້ງແຕ່ວັນທີ 7 ສິງຫາ 2015 ຫາ ວັນທີ 6 ສິງຫາ 2035 ເພື່ອຮ່ວມກັນດຳເນີນທຸລະກິດໂຮງໜັງກັບເມເຈີ. ລາຍຮັບຈາກການດຳເນີນງານດັ່ງກ່າວແມ່ນໄດ້ຖືກແບ່ງສ່ວນລະຫວ່າງ ບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ ເຊິ່ງໄດ້ກຳນົດໄວ້ໃນສັນຍາ. ດັ່ງນັ້ນ, ເມເຈີ ຈະຕ້ອງໄດ້ຈ່າຍເງິນໃຫ້ກັບບໍລິສັດ ດັ່ງຕໍ່ໄປນີ້:

- ພື້ນທີ່ A:
  - (i) ແບ່ງສ່ວນລາຍຮັບພື້ນທີ່ການດຳເນີນງານຫຼັກ ແລະ,
  - (ii) ແບ່ງສ່ວນລາຍຮັບຂອງການສຳປະທານ.
- ພື້ນທີ່ B:
  - (i) ແບ່ງສ່ວນລາຍຮັບຂອງໂບລິ່ງ ລວມເຖິງການເຊົ່າ ຫຼື ຂາຍອຸປະກອນທີ່ກ່ຽວຂ້ອງ,
  - (ii) ແບ່ງສ່ວນລາຍຮັບຂອງຍອດຂາຍອາຫານ ແລະ ເຄື່ອງດື່ມ ຈາກສະຖານທີ່ຫຼິ້ນໂບລິ່ງ ແລະ ພື້ນທີ່ຄາຣາໂອເກະທີ່ເມເຈີອາດຈະດຳເນີນງານ.
- ອື່ນໆ: ຄ່າທຳນຽມຄົງທີ່ປະຈຳເດືອນ.

ບໍລິສັດ ບໍ່ມີສິດຍົກເລີກ BCC ກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງໂດຍ ເມເຈີ; (ii) ມີເຫດສຸດວິໄສ; (iii) ຝ່າຍໃດຝ່າຍໜຶ່ງຢື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້.

19. ເຫດການທີ່ສຳຄັນ

ກິດຈະ ກຳ ຫຼັກຂອງບໍລິສັດຕໍ່ໃບອະນຸຍາດ ດຳ ເນີນທຸລະກິດແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ ຕ່າງໆ. ນອກຈາກນັ້ນ, ກິດຈະ ກຳ ເຫຼົ່ານີ້ແມ່ນມີຂຶ້ນພາຍໃນ ສປປ ລາວ ເທົ່ານັ້ນ. ດ້ວຍເຫດນີ້, ການບໍລິຫານຂອງບໍລິສັດມີທັດສະນະວ່າມີພຽງແຕ່ໜຶ່ງຕອນສຳລັບທຸລະກິດແລະພູມສາດເທົ່ານັ້ນແລະດັ່ງນັ້ນການ ນຳ ສະ ເໜີ ຂໍ້ມູນສ່ວນບໍ່ຈຳເປັນ.

20. ກຳໄລຕໍ່ຮຸ້ນ

ລາຍການຕໍ່ໄປນີ້ສະແດງໃຫ້ເຫັນເຖິງລາຍໄດ້ ແລະ ຂໍ້ມູນຮຸ້ນທີ່ໃຊ້ເປັນພື້ນຖານ ແລະ ຄິດໄລ່ກຳໄລຕໍ່ຮຸ້ນແບບຫຼຸດ:

	ສຳລັບປີທີ່ ສິ້ນສຸດ ນະວັນທີ 31 ທັນວາ 2020	*ສຳລັບປີທີ່ ສິ້ນສຸດ ນະວັນທີ 31 ທັນວາ 2019*
ກຳໄລສຸດທິຈາກຜູ້ຖືຮຸ້ນສາມັນເປັນເງິນກີບ	9,501,239,175	7,733,881,659
ຈຳນວນສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ (*)	147,199,900	126,299,119
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ	**64.55**	**61.23**

(*) ຈຳນວນຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກ ແມ່ນຄິດໄລ່ຕາມພື້ນຖານຂໍ້ມູນດັ່ງຕໍ່ໄປນີ້:

- ຈຳນວນຮຸ້ນແຕ່ວັນທີ 1 ມັງກອນ 2020 ຫາ ວັນທີ 31 ທັນວາ 2020 ຈຳນວນ 147,199,000 ຮຸ້ນ.

21. ເຫດການທີ່ສຳຄັນ

ອີງຕາມມະຕິຂອງມາດຕະການເພື່ອປ້ອງກັນການແຜ່ກະຈາຍຂອງ Covid-19 ໃນວັນທີ 30 ມີນາ 2020 ອອກໂດຍຜູ້ບໍລິຫານຂອງບໍລິສັດ, ຮ້ານຄ້າຍ່ອຍແມ່ນຈະຕ້ອງຢຸດການດຳເນີນການຊົ່ວຄາວ ນັບແຕ່ວັນທີ 30 ມີນາ 2020 ຫາ 29 ເມສາ 2020 ໃນຂະນະທີ່ສິນຄ້າ ແລະ ການບໍລິການຂອງຫ້ອງການຍັງຄົງເປີດຢູ່. ຫຼັງຈາກນັ້ນ, ບໍລິສັດໄດ້ຂະຫຍາຍມາດຕະການຈົນຮອດວັນທີ 3 ພຶດສະພາ 2020 ແລະ ໄດ້ເລີ່ມການດຳເນີນງານການເປີດຫ້າງສັບພະສິນຄ້າຄືນໃໝ່ ໃນວັນທີ 4 ພຶດສະພາ 2020. ການຍົກເວັ້ນ ແລະ ການຫຼຸດລາຄາສຳລັບຄ່າເຊົ່າແມ່ນໄດ້ສະໜອງໃຫ້ຜູ້ເຊົ່າໂດຍກົງໃນພື້ນທີ່ຈຳໜ່າຍ ຜູ້ທີ່ຕ້ອງໄດ້ປິດຮ້ານຂອງພວກເຂົາ.

ບໍລິສັດໄດ້ດຳເນີນການປະເມີນເບື້ອງຕົ້ນກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນຂອງ Covid-19 ຕໍ່ການດຳເນີນງານ,ກະແສເງິນສົດ ແລະ ສະພາບການເງິນພ້ອມທັງການດຳເນີນງານຂອງຜູ້ເຊົ່າ ແລະ ລູກຄ້າ-ການບໍລິຫານ ເຫັນໄດ້ວ່າ:ທຸລະກິດໂດຍລວມຂອງບໍລິສັດບໍ່ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກໂລກລະບາດດັ່ງກ່າວ.

22. ເຫດການຫຼັງຈາກວັນທີອອກບົດລາຍງານ

ບໍ່ມີບັນຫາອື່ນ ຫຼື ເຫດການອື່ນໆທີ່ເກີດຂຶ້ນພາຍຫຼັງວັນທີ 31 ທັນວາ 2020 ທີ່ຮຽກຮ້ອງໃຫ້ມີການປັບປຸງ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງບໍລິສັດ.

ກະກຽມໂດຍ:

孙飞虎

ທ່ານ ຊິນເຟີ ຫຸ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

7 ເມສາ 2021